**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ

ເລກທີ 354/ລບ
ນະຄອນຫຼວງວຽງຈັນ, ວັນທີ 20-11-2023

# ດຳລັດ
# ວ່າດ້ວຍການປັບໃໝ ແລະ ມາດຕະການອື່ນ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການບິນພົນລະເຮືອນ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍການບິນພົນລະເຮືອນ ສະບັບເລກທີ 53/ສພຊ, ລົງວັນທີ 26 ມິຖຸນາ 2018;
- ອີງຕາມ ໜັງສືສະເໜີຂອງ ກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 490/ຍທຂ, ລົງວັນທີ 18 ສິງຫາ 2022.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການປັບໃໝ ແລະ ມາດຕະການອື່ນ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການບິນພົນລະເຮືອນ ເພື່ອເປັນບ່ອນອີງໃຫ້ແກ່ເຈົ້າໜ້າທີ່ການບິນພົນລະເຮືອນ ໃນການຈັດຕັ້ງປະຕິບັດການປັບໃໝ ແລະ ມາດຕະການອື່ນຕໍ່ຜູ້ລະເມີດ ຢ່າງຖືກຕ້ອງ ແລະ ເຂັ້ມງວດ ແນໃສ່ຮັບປະກັນໃຫ້ການບິນພົນລະເຮືອນ ມີຄວາມ ເປັນລະບຽບຮຽບຮ້ອຍ, ສະດວກ, ວ່ອງໄວ, ປອດໄພ ແລະ ປ້ອງກັນຄວາມປອດໄພ ຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 ການປັບໃໝ ແລະ ມາດຕະການອື່ນ**

ການປັບໃໝ ແມ່ນ ມາດຕະການທາງດ້ານການເງິນທີ່ນຳໃຊ້ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການບິນພົນລະເຮືອນ ຕາມອັດຕາຄ່າປັບໃໝທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

ມາດຕະການອື່ນ ແມ່ນ ການປະຕິບັດມາດຕະການເພີ່ມ ນອກຈາກມາດຕະການປັບໃໝຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການບິນພົນລະເຮືອນ ເປັນຕົ້ນ ການ ສຶກສາອົບຮົມ, ທັບມ້າງ, ຍົກຍ້າຍ, ໂຈະ ຫຼື ຍົກເລີກໃບອະນຸຍາດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ເຮືອບິນຂະໜາດນ້ອຍ** ໝາຍເຖິງ ເຮືອບິນທີ່ມີນ້ຳໜັກບັນທຸກລວມ ບໍ່ເກີນ ຫ້າຮ້ອຍ ກິໂລກຣາມ;

2. **ເຮືອບິນຂະໜາດກາງ** ໝາຍເຖິງ ເຮືອບິນທີ່ມີນ້ຳໜັກບັນທຸກລວມ ແຕ່ ຫ້າຮ້ອຍໜຶ່ງ ຫາ ຊາວສອງພັນແປດຮ້ອຍ ກິໂລກຣາມ;

3. **ເຮືອບິນຂະໜາດໃຫຍ່** ໝາຍເຖິງ ເຮືອບິນທີ່ມີນ້ຳໜັກບັນທຸກລວມ ຊາວສອງພັນແປດຮ້ອຍໜຶ່ງ ກິໂລກຣາມ ຂຶ້ນໄປ;

4. **ສັນຊາດເຮືອບິນ** ໝາຍເຖິງ ຖານະຂອງເຮືອບິນທີ່ສະແດງວ່າເປັນຂອງປະເທດໃດໜຶ່ງ ດ້ວຍການຂຶ້ນທະບຽນ ແລະ ຕິດເຄື່ອງໝາຍສັນຊາດ ເຮືອບິນ ຕາມກົດໝາຍຂອງ ສປປ ລາວ ຫຼື ສົນທິສັນຍາທີ່ ສປປ ລາວ ເປັນພາຄີ;

5. **ທະບຽນເຮືອບິນ** ໝາຍເຖິງ ເລກລະຫັດຂອງເຮືອບິນທີ່ໄດ້ຂຶ້ນທະບຽນຢ່າງຖືກຕ້ອງ ຕາມກົດໝາຍຂອງ ສປປ ລາວ ຫຼື ສົນທິສັນຍາທີ່ ສປປ ລາວ ເປັນພາຄີ;

6. **ປຶ້ມຄູ່ມືເຕັກນິກການບິນ** ໝາຍເຖິງ ເອກະສານຂອງໂຮງງານຜູ້ຜະລິດ ທີ່ກຳນົດລະອຽດຂໍ້ແນະນຳດ້ານເຕັກນິກການນຳໃຊ້ເຮືອບິນ ເພື່ອຊ່ວຍໃຫ້ຈູບິນປະຕິບັດຢ່າງຖືກຕ້ອງ;

7. **ປຶ້ມຄູ່ມືປະຕິບັດການບິນ** ໝາຍເຖິງ ເອກະສານຂອງຜູ້ຂົນສົ່ງທາງອາກາດ ທີ່ກຳນົດນະໂຍບາຍ, ຫຼັກການ ແລະ ລະບຽບການ ທີ່ຈູບິນຕ້ອງປະຕິບັດຢ່າງເຂັ້ມງວດ ເພື່ອຄວາມປອດໄພການບິນ ແລະ ປ້ອງກັນຄວາມປອດໄພການບິນ;

8. **ຄຳແນະນຳກ່ຽວກັບຄວາມປອດໄພການບິນ** ໝາຍເຖິງ ກົດລະບຽບທົ່ວໄປ, ຫຼັກການ ກ່ຽວກັບວິທີການ, ຂັ້ນຕອນ ໃນການປະຕິບັດຄວາມປອດໄພການບິນ;

9. **ສິ່ງອຳນວຍຄວາມສະດວກການບິນ** ໝາຍເຖິງ ລະບົບວິທະຍຸການບິນ, ບໍລິການພາກພື້ນດິນ, ຄວາມປອດໄພ, ປ້ອງກັນຄວາມປອດໄພ, ໄຟຟ້າ, ນ້ຳປະປາ ແລະ ສິ່ງອຳນວຍຄວາມສະດວກອື່ນ ທີ່ຮັບໃຊ້ໃຫ້ແກ່ການບິນພົນລະເຮືອນ;

10. **ຜູ້ຂົນສົ່ງທາງອາກາດ** ໝາຍເຖິງ ຜູ້ໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດບໍລິການຂົນສົ່ງທາງອາກາດດ້ວຍເຮືອບິນ;

11. **ອູ່ສ້ອມແປງເຮືອບິນ** ໝາຍເຖິງ ສະຖານທີ່ສ້ອມແປງ, ຟື້ນຟູ ແລະ ຕົບແຕ່ງເຮືອບິນ ໃຫ້ໄດ້ຕາມມາດຕະຖານເຕັກນິກເດີມ;

12. **ໃບຢັ້ງຢືນສຸຂະພາບ** ໝາຍເຖິງ ໜັງສືຂອງແພດການບິນ ທີ່ອອກໃຫ້ ຈູນັກບິນ, ຈູຫ້ອງໂດຍສານ ແລະ ນັກບັນຊາການຈະລາຈອນທາງອາກາດ;

13. **ລະບົບຄຸ້ມຄອງຄວາມປອດໄພການບິນ** ໝາຍເຖິງ ວິທີການຄຸ້ມຄອງຄວາມປອດໄພການບິນ ເຊັ່ນ ໂຄງຮ່າງການຈັດຕັ້ງ, ນະໂຍບາຍ, ພັນທະ, ຄວາມຮັບຜິດຊອບ, ການບໍລິຫານຄວາມສ່ຽງ ແລະ ຂັ້ນຕອນຢ່າງເປັນລະບົບ;

14. **ປຶ້ມບັນທຶກການບິນ** ໝາຍເຖິງ ປຶ້ມບັນທຶກລາຍລະອຽດທີ່ສຳຄັນໃນຊ່ວງເວລາບິນ ຂອງເຮືອບິນ ແລະ ການປະຕິບັດງານຂອງຈູບິນ ໃນແຕ່ລະຖ້ຽວບິນ ຕາມແບບພິມທີ່ໄດ້ກຳນົດໄວ້ ໃນກົດໝາຍຂອງປະເທດເຈົ້າຂອງທະບຽນ.

**ມາດຕາ 4 ຫຼັກການກ່ຽວກັບ ການປັບໃໝ ແລະ ມາດຕະການອື່ນ**

ການປັບໃໝ ແລະ ມາດຕະການອື່ນ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ກົດໝາຍ ແລະ ລະບຽບການ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ;

2. ຄຸ້ມຄອງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;

3. ຮັບປະກັນຄວາມ ເປັນລະບຽບຮຽບຮ້ອຍ, ປອດໄພ, ສະດວກ, ວ່ອງໄວ, ມີປະສິດທິພາບ ແລະ ປະສິດທິຜົນສູງ;

4. ຮັບປະກັນການປະຕິບັດອັດຕາຄ່າປັບໃໝ ເປັນເອກະພາບ, ຖືກຕ້ອງ, ໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້.

**ມາດຕາ 5 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການບິນພົນລະເຮືອນ ຢູ່ ສປປ ລາວ.

## ໝວດທີ 2
## ການປັບໃໝຕໍ່ຜູ້ລະເມີດລະບຽບການ ກ່ຽວກັບການຂຶ້ນທະບຽນເຮືອບິນ

**ມາດຕາ 6 ການລະເມີດລະບຽບການກ່ຽວກັບສັນຊາດ ແລະ ທະບຽນເຮືອບິນ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດລະບຽບການກ່ຽວກັບ ສັນຊາດ ແລະ ທະບຽນເຮືອບິນ ຈະຖືກປັບໃໝ ດັ່ງນີ້:

1) ເຮືອບິນທີ່ບໍ່ຂຶ້ນທະບຽນ

- 1.000.000 ກີບ ສຳລັບເຮືອບິນທີ່ບໍ່ມີຄົນຂັບ;
- 30.000.000 ກີບ ສຳລັບເຮືອບິນຂະໜາດນ້ອຍ;
- 50.000.000 ກີບ ສຳລັບເຮືອບິນຂະໜາດກາງ;
- 100.000.000 ກີບ ສຳລັບເຮືອບິນຂະໜາດໃຫຍ່.

2) 20.000.000 ກີບ ສຳລັບເຮືອບິນທີ່ຕິດ ເຄື່ອງໝາຍສັນຊາດ ຫຼື ເຄື່ອງໝາຍທະບຽນ ບໍ່ຖືກຕ້ອງຕາມລະບຽບການ;

3) 30.000.000 ກີບ ສຳລັບເຮືອບິນທີ່ບໍ່ຕິດ ເຄື່ອງໝາຍສັນຊາດ ຫຼື ເຄື່ອງໝາຍທະບຽນ;

4) 30.000.000 ກີບ ສຳລັບການນຳໃຊ້ເຮືອບິນທີ່ຂຶ້ນທະບຽນ ຢູ່ ສປປ ລາວ ແລ້ວໄປຂຶ້ນທະບຽນຢູ່ປະເທດອື່ນ.

**ມາດຕາ 7 ການລະເມີດລະບຽບການກ່ຽວກັບເອກະສານປະຈຳເຮືອບິນ ແລະ ຖ້ຽວບິນ**

ເຮືອບິນຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ທີ່ບໍ່ມີເອກະສານໃດໜຶ່ງ ປະຈຳເຮືອບິນ ແລະ ຖ້ຽວບິນ ຈະຖືກປັບໃໝ 15.000.000 ກີບ ຕໍ່ແຕ່ລະລາຍການ ດັ່ງນີ້:

1. ໃບຢັ້ງຢືນການຂຶ້ນທະບຽນ;
2. ໃບຢັ້ງຢືນເຕັກນິກສົມບູນເຮືອບິນ ຫຼື ໃບອະນຸຍາດບິນສະເພາະ;
3. ໃບຢັ້ງຢືນຜູ້ຂົນສົ່ງທາງອາກາດ ແລະ ໃບກຳນົດການບິນສະເພາະ;
4. ໃບອະນຸຍາດປະຕິບັດໜ້າທີ່ຂອງຈຸບິນ;
5. ໃບຢັ້ງຢືນລະດັບສຽງຂອງເຮືອບິນ;
6. ໃບອະນຸຍາດນຳໃຊ້ອຸປະກອນສື່ສານປະຈຳເຮືອບິນ;
7. ປື້ມບັນທຶກການບິນ;
8. ປື້ມຄູ່ມືເຕັກນິກການບິນ ຫຼື ປື້ມຄູ່ມືປະຕິບັດການບິນ;
9. ໃບດຸ່ນດ່ຽງນ້ຳໜັກ, ບັນຊີລາຍຊື່ ແລະ ບັນຊີເຄື່ອງຂອງ ຂອງຜູ້ໂດຍສານ, ບັນຊີສິນຄ້າ, ເຄື່ອງຝາກທາງໄປສະນີ;
10. ໃບປະກັນໄພ.

ສຳລັບເຮືອບິນປະເພດອື່ນ ຫາກບໍ່ມີເອກະສານປະຈຳເຮືອບິນ ຄົບຖ້ວນຕາມລະບຽບການ ຈະຖືກປັບໃໝ 10.000.000 ກີບ.

## ໝວດທີ 3
## ການປັບໃໝຕໍ່ຜູ້ລະເມີດລະບຽບການ ກ່ຽວກັບເຕັກນິກສົມບູນເຮືອບິນ

**ມາດຕາ 8 ການລະເມີດລະບຽບການກ່ຽວກັບໃບຢັ້ງຢືນເຕັກນິກສົມບູນເຮືອບິນ**

ເຮືອບິນຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ທີ່ບໍ່ມີໃບຢັ້ງຢືນເຕັກນິກສົມບູນເຮືອບິນ ຫຼື ໝົດອາຍຸ ທີ່ອອກໃຫ້ໂດຍ ກົມການບິນພົນລະເຮືອນ ຈະຖືກປັບໃໝ ດັ່ງນີ້:

1) 50.000.000 ກີບ ສຳລັບເຮືອບິນຂະໜາດນ້ອຍ;
2) 80.000.000 ກີບ ສຳລັບເຮືອບິນຂະໜາດກາງ;
3) 100.000.000 ກີບ ສຳລັບເຮືອບິນຂະໜາດໃຫຍ່.

**ມາດຕາ 9 ການລະເມີດລະບຽບການກ່ຽວກັບໃບຢັ້ງຢືນຊະນິດເຮືອບິນ**

ເຮືອບິນຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ທີ່ບໍ່ມີໃບຢັ້ງຢືນຊະນິດເຮືອບິນຈາກໂຮງງານຜະລິດ ແລະ ບໍ່ໄດ້ຮັບຮອງຈາກ ກົມການບິນພົນລະເຮືອນ ຈະຖືກປັບໃໝ ດັ່ງນີ້:

1) 25.000.000 ກີບ ສຳລັບເຮືອບິນຂະໜາດນ້ອຍ;
2) 30.000.000 ກີບ ສຳລັບເຮືອບິນຂະໜາດກາງ;
3) 35.000.000 ກີບ ສຳລັບເຮືອບິນຂະໜາດໃຫຍ່.

**ມາດຕາ 10 ການລະເມີດລະບຽບການກ່ຽວກັບປຶ້ມບັນທຶກການບິນ**

ເຮືອບິນຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຈະຖືກປັບໃໝ ດັ່ງນີ້:

1) 10.000.000 ກີບ ສຳລັບຖ້ຽວບິນ ທີ່ບໍ່ບັນທຶກລາຍລະອຽດ ຫຼື ບັນທຶກບໍ່ຄົບຖ້ວນ ຕາມແບບພິມໃນຊ່ວງເວລາບິນ ແລະ ການປະຕິບັດການບິນ;
2) 30.000.000 ກີບ ສຳລັບຖ້ຽວບິນ ທີ່ບໍ່ມີປຶ້ມບັນທຶກການບິນ.

**ມາດຕາ 11 ການລະເມີດລະບຽບການກ່ຽວກັບປຶ້ມຄູ່ມືເຕັກນິກການບິນ, ປຶ້ມຄູ່ມືປະຕິບັດການບິນ ແລະ ຄຳແນະນຳກ່ຽວກັບຄວາມປອດໄພການບິນ**

ເຮືອບິນຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ທີ່ບໍ່ປະຕິບັດຕາມ ປຶ້ມຄູ່ມືເຕັກນິກການບິນ, ປຶ້ມຄູ່ມືປະຕິບັດການບິນ ແລະ ຄຳແນະນຳກ່ຽວກັບຄວາມປອດໄພການບິນ ຈະຖືກປັບໃໝ ດັ່ງນີ້:

1) 20.000.000 ກີບ ສຳລັບເຮືອບິນຂະໜາດນ້ອຍ;
2) 30.000.000 ກີບ ສຳລັບເຮືອບິນຂະໜາດກາງ;
3) 40.000.000 ກີບ ສຳລັບເຮືອບິນຂະໜາດໃຫຍ່.

**ມາດຕາ 12 ການລະເມີດລະບຽບການກ່ຽວກັບອຸປະກອນສື່ສານປະຈຳເຮືອບິນ**

ເຮືອບິນຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ທີ່ ປະກອບ ຫຼື ຕິດຕັ້ງອຸປະກອນສື່ສານປະຈຳເຮືອບິນ ບໍ່ຖືກຕ້ອງຕາມມາດຕະຖານເຕັກນິກ ຈະຖືກປັບໃໝ ດັ່ງນີ້:

1) 20.000.000 ກີບ ສຳລັບເຮືອບິນຂະໜາດນ້ອຍ;
2) 40.000.000 ກີບ ສຳລັບເຮືອບິນຂະໜາດກາງ;
3) 60.000.000 ກີບ ສຳລັບເຮືອບິນຂະໜາດໃຫຍ່.

**ມາດຕາ 13 ການລະເມີດລະບຽບການກ່ຽວກັບລະດັບສຽງຂອງເຮືອບິນ**

ເຮືອບິນຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ທີ່ລະເມີດໃບຢັ້ງຢືນລະດັບສຽງຂອງເຮືອບິນ ຫຼື ລະດັບສຽງຂອງເຮືອບິນເກີນມາດຕະຖານທີ່ກຳນົດໄວ້ໃນ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ຈະຖືກປັບໃໝ ດັ່ງນີ້:

1) 15.000.000 ກີບ ສໍາລັບເຮືອບິນຂະໜາດນ້ອຍ;

2) 20.000.000 ກີບ ສໍາລັບເຮືອບິນຂະໜາດກາງ;

3) 30.000.000 ກີບ ສໍາລັບເຮືອບິນຂະໜາດໃຫຍ່.

**ມາດຕາ 14 ການລະເມີດລະບຽບການກ່ຽວກັບ ການນໍາເຂົ້າ, ສົ່ງອອກ ເຮືອບິນ, ເຄື່ອງຈັກ, ໃບພັດ, ຊິ້ນສ່ວນປະກອບ ແລະ ອຸປະກອນຂອງເຮືອບິນ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ ນໍາເຂົ້າ, ສົ່ງອອກ ເຮືອບິນ, ເຄື່ອງຈັກ, ໃບພັດ, ຊິ້ນສ່ວນປະກອບ ແລະ ອຸປະກອນຂອງເຮືອບິນ ບໍ່ຖືກຕ້ອງຕາມລະບຽບການຂອງ ກົມການບິນພົນລະເຮືອນ ຈະຖືກປັບໃໝ ດັ່ງນີ້:

1) 3.000.000 ກີບ ສໍາລັບເຮືອບິນບໍ່ມີຄົນຂັບ;

2) 20.000.000 ກີບ ສໍາລັບເຮືອບິນຂະໜາດນ້ອຍ;

3) 40.000.000 ກີບ ສໍາລັບເຮືອບິນຂະໜາດກາງ;

4) 60.000.000 ກີບ ສໍາລັບເຮືອບິນຂະໜາດໃຫຍ່.

**ມາດຕາ 15 ການລະເມີດລະບຽບການກ່ຽວກັບການບໍາລຸງຮັກສາ ແລະ ສ້ອມແປງ ຂອງອູ່ສ້ອມແປງເຮືອບິນ**

ອູ່ສ້ອມແປງເຮືອບິນ ທີ່ລະເມີດລະບຽບການກ່ຽວກັບການ ບໍາລຸງຮັກສາ ແລະ ສ້ອມແປງ ຈະຖືກປັບໃໝ ດັ່ງນີ້:

1) 10.000.000 ກີບ ສໍາລັບການນໍາໃຊ້ສິ່ງອໍານວຍຄວາມສະດວກ, ເຄື່ອງມື ແລະ ອຸປະກອນ ໃນການບໍາລຸງຮັກສາ ແລະ ສ້ອມແປງ ເຮືອບິນ ບໍ່ຖືກຕ້ອງຕາມປື້ມຄູ່ມືເຕັກນິກສ້ອມແປງເຮືອບິນ;

2) 15.000.000 ກີບ ສໍາລັບການບໍາລຸງຮັກສາ ແລະ ສ້ອມແປງ ເຮືອບິນ, ເຄື່ອງຈັກ, ລໍາຕົວ, ໃບພັດ, ຊິ້ນສ່ວນປະກອບ ແລະ ອຸປະກອນຂອງເຮືອບິນ ໂດຍບໍ່ໄດ້ຮັບອະນຸຍາດຈາກການກົມການບິນພົນລະເຮືອນ;

3) 20.000.000 ກີບ ສໍາລັບການບໍາລຸງຮັກສາ ແລະ ສ້ອມແປງ ເຮືອບິນ, ເຄື່ອງຈັກ, ລໍາຕົວ, ໃບພັດ, ຊິ້ນສ່ວນປະກອບ ແລະ ອຸປະກອນຂອງເຮືອບິນ ໂດຍບໍ່ມີໃບຢັ້ງຢືນຈາກໂຮງງານຜະລິດ ແລະ ບໍ່ໄດ້ຖືກຮັບຮອງຈາກກົມການບິນພົນລະເຮືອນ;

4) 20.000.000 ກີບ ສໍາລັບການທົດສອບ ຫຼື ທຽບຖຽງ ວັດຖຸປະກອນໃນການບໍາລຸງຮັກສາ ແລະ ສ້ອມແປງ ເຮືອບິນ ໂດຍບໍ່ປະຕິບັດ ຕາມລະບຽບການ ຂອງກົມການບິນພົນລະເຮືອນ;

5) 25.000.000 ກີບ ສໍາລັບການບໍາລຸງຮັກສາ ແລະ ສ້ອມແປງ ເຮືອບິນ ທີ່ບໍ່ຖືກຕ້ອງຕາມມາດຕະຖານເຕັກນິກ ຂອງເຮືອບິນ;

6) 25.000.000 ກີບ ສໍາລັບການປະກອບເອກະສານກ່ຽວກັບການ ບໍາລຸງຮັກສາ ແລະ ສ້ອມແປງ ເຮືອບິນ, ເຄື່ອງຈັກ, ລໍາຕົວ, ໃບພັດ, ຊິ້ນສ່ວນປະກອບ ແລະ ອຸປະກອນຂອງເຮືອບິນ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມກໍານົດເວລາ ຕາມລະບຽບການ ຂອງກົມການບິນພົນລະເຮືອນ;

7) 30.000.000 ກີບ ສໍາລັບການບໍາລຸງຮັກສາ ແລະ ສ້ອມແປງ ເຮືອບິນ, ເຄື່ອງຈັກ, ລໍາຕົວ, ໃບພັດ, ຊິ້ນສ່ວນປະກອບ ແລະ ອຸປະກອນຂອງເຮືອບິນ ບໍ່ສອດຄ່ອງກັບແຜນການ ທີ່ໄດ້ຖືກຮັບຮອງຈາກກົມການບິນພົນລະເຮືອນ;

8) 40.000.000 ກີບ ສໍາລັບການປິດບັງຄວາມຜິດພາດກ່ຽວກັບການບໍາລຸງຮັກສາ ແລະ ສ້ອມແປງເຮືອບິນ.

## ໝວດທີ 4
## ການປັບໃໝຕໍ່ຜູ້ລະເມີດລະບຽບການກ່ຽວກັບ ການປະຕິບັດການບິນ ແລະ ການບິນທົ່ວໄປ

**ມາດຕາ 16 ການລະເມີດລະບຽບການກ່ຽວກັບການປະຕິບັດການບິນ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດລະບຽບການກ່ຽວກັບການປະຕິບັດການບິນ ຈະຖືກປັບໃໝ ດັ່ງນີ້:

1) 500.000 ກີບ ສໍາລັບການນໍາໃຊ້ເຄື່ອງເອເລັກໂຕຣນິກ, ເຄື່ອງສົ່ງວິທະຍຸ ຫຼື ເຄື່ອງ ຮັບ-ສົ່ງ ສັນຍານ ຢູ່ເທິງເຮືອບິນ ໂດຍບໍ່ໄດ້ຮັບອະນຸຍາດ;

2) 700.000 ກີບ ສໍາລັບການເຮັດໃຫ້ ອຸປະກອນ ຂອງເຮືອບິນ ເປ່ເພເສຍຫາຍ;

3) 1.000.000 ກີບ ສໍາລັບການບໍ່ປະຕິບັດຕາມຄໍາແນະນໍາ ກ່ຽວກັບຄວາມປອດໄພ, ການປ້ອງກັນຄວາມປອດໄພການບິນ ຫຼື ການປ້ອງກັນພະຍາດລະບາດ ໃນການປະຕິບັດການບິນ;

4) 1.500.000 ກີບ ສໍາລັບການນໍາໃຊ້ວັດຖຸປະກອນຄວາມປອດໄພ ຢູ່ເທິງເຮືອບິນ ທີ່ບໍ່ຖືກຕ້ອງ;

5) 1.500.000 ກີບ ສໍາລັບການສື່ສານທາງສຽງ ທີ່ບໍ່ຖືກຕ້ອງຕາມ ຂັ້ນຕອນຂອງປື້ມຄູ່ມືປະຕິບັດການບິນ;

6) 2.500.000 ກີບ ສໍາລັບການປັບປຸງ ຫຼື ເກັບຮັກສາ ລະບົບເອກະສານດ້ານຄວາມປອດໄພ ແລະ ປື້ມຄູ່ມືປະຕິບັດການບິນ ບໍ່ຖືກຕ້ອງ ຕາມລະບຽບການ ຂອງກົມການບິນພົນລະເຮືອນ.

7) 3.500.000 ກີບ ສໍາລັບການສົ່ງຂໍ້ມູນແຕ່ລະຖ້ຽວບິນ ໃຫ້ພາກສ່ວນທີ່ກ່ຽວຂ້ອງບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ເປັນຕົ້ນ ໃບດຸ່ນດ່ຽງນໍ້າໜັກ, ບັນຊີລາຍຊື່, ບັນຊີເຄື່ອງຂອງ ຂອງຜູ້ໂດຍສານ, ບັນຊີສິນຄ້າ, ເຄື່ອງຝາກທາງໄປສະນີ ຕາມລະບຽບການຂອງກົມການບິນພົນລະເຮືອນ;

8) 3.500.000 ກີບ ສໍາລັບການນໍາໃຊ້ເຮືອບິນ ທີ່ມີວັດຖຸປະກອນຄວາມປອດໄພ ແລະ ສິ່ງອໍານວຍຄວາມສະດວກ ທີ່ບໍ່ເໝາະສົມ ແລະ ພຽງພໍ;

9) 3.500.000 ກີບ ສໍາລັບການກໍານົດນໍ້າໜັກດຸ່ນດ່ຽງ ຂອງເຮືອບິນ ທີ່ບໍ່ຖືກຕ້ອງຕາມມາດຕະຖານເຕັກນິກ;

10) 4.500.000 ກີບ ສໍາລັບການເປີດປະຕູເຮືອບິນ ໂດຍບໍ່ໄດ້ຮັບອະນຸຍາດ;

11) 5.000.000 ກີບ ສໍາລັບການບໍ່ປະຕິບັດຕາມປື້ມຄູ່ມືປະຕິບັດການບິນ;

12) 5.500.000 ກີບ ສໍາລັບການນໍາໃຊ້ເຮືອບິນ ເພື່ອການຄ້າ ໂດຍບໍ່ໄດ້ຮັບອະນຸຍາດ ຈາກກົມການບິນພົນລະເຮືອນ;

13) 50.000.000 ກີບ ສໍາລັບການກວດກາສະພາບ ພາຍໃນ ແລະ ພາຍນອກ ຂອງເຮືອບິນ ທີ່ບໍ່ຖືກຕ້ອງຕາມມາດຕະຖານເຕັກນິກ.

**ມາດຕາ 17 ການລະເມີດລະບຽບການກ່ຽວກັບການບິນທົ່ວໄປ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດລະບຽບການກ່ຽວກັບການບິນທົ່ວໄປ ຈະຖືກປັບໃໝ ດັ່ງນີ້:

1) 500.000 ກີບ ສໍາລັບເຮືອບິນບໍ່ມີຄົນຂັບ ບໍ່ໄດ້ຮັບອະນຸຍາດເຂດບິນ ຫຼື ບິນເກີນຂອບເຂດກໍານົດ;

2) 3.000.000 ກີບ ສໍາລັບການນໍາໃຊ້ເຮືອບິນ ທີ່ບໍ່ມີເອກະສານປະຈໍາເຮືອບິນ ຕາມແຕ່ລະປະເພດ;

3) 3.000.000 ກີບ ສໍາລັບການນໍາໃຊ້ເຮືອບິນທີ່ ບໍ່ມີໃບຢັ້ງຢືນເຕັກນິກສົມບູນເຮືອບິນ ຫຼື ໃບອະນຸຍາດບິນສະເພາະ;

4) 3.000.000 ກີບ ສໍາລັບການຂຶ້ນບິນ ໂດຍບໍ່ໄດ້ຮັບອະນຸຍາດ;

5) 15.000.000 ກີບ ສໍາລັບການນໍາໃຊ້ຈຸບິນທີ່ບໍ່ມີໃບອະນຸຍາດປະຕິບັດໜ້າທີ່ການບິນ ຕາມປະເພດ, ຊະນິດ ແລະ ຂະໜາດ ເຮືອບິນ;

6) 25.000.000 ກີບ ສໍາລັບການນໍາໃຊ້ການບິນທົ່ວໄປ ເພື່ອຈຸດປະສົງທາງການຄ້າ ໂດຍບໍ່ມີໃບຢັ້ງຢືນຜູ້ຂົນສົ່ງທາງອາກາດຈາກກົມການບິນພົນລະເຮືອນ.

## ໝວດທີ 5
## ການປັບໃໝຕໍ່ຜູ້ລະເມີດລະບຽບການກ່ຽວກັບ ສະໜາມບິນ, ເດີ່ນບິນ

**ມາດຕາ 18 ການລະເມີດລະບຽບການກ່ຽວກັບການ ຄຸ້ມຄອງ ແລະ ປະຕິບັດງານ ໃນ ສະໜາມບິນ, ເດີ່ນບິນ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດລະບຽບການກ່ຽວກັບ ຄຸ້ມຄອງ ແລະ ປະຕິບັດງານ ໃນ ສະໜາມບິນ, ເດີ່ນບິນ ຈະຖືກປັບໃໝ ດັ່ງນີ້:

1) 5.000.000 ກີບ ສໍາລັບການ ລ້ຽງສັດ, ປ່ອຍສັດ ໃນເຂດ ສະໜາມບິນ, ເດີ່ນບິນ;

2) 5.000.000 ກີບ ສໍາລັບການບໍ່ໃສ່ເສື້ອສະທ້ອນແສງ ຫຼື ເສື້ອທີ່ມີແຖບສະທ້ອນແສງ ໃນເວລາປະຕິບັດງານຢູ່ເຂດປະຕິບັດການບິນ;

3) 5.000.000 ກີບ ສໍາລັບການ ເຄື່ອນຍ້າຍ, ປ່ຽນແປງຮູບຮ່າງ ຫຼື ສ້າງຄວາມເປ່ເພເສຍຫາຍແກ່ ວັດຖຸປະກອນ, ປ້າຍ, ເຄື່ອງໝາຍ, ເຄື່ອງແບ່ງເຂດ, ເຄື່ອງສົ່ງສັນຍານ, ເຄື່ອງປ້ອງກັນຄວາມປອດໄພ ແລະ ສິ່ງອໍານວຍຄວາມສະດວກ ໃນ ສະໜາມບິນ, ເດີ່ນບິນ;

4) 5.000.000 ກີບ ສໍາລັບການ ປ່ຽນແປງ ຫຼື ແກ້ໄຂເພີ່ມເຕີມ ເນື້ອໃນຂອງ ປື້ມຄູ່ມື ສະໜາມບິນ, ເດີ່ນບິນ ໂດຍບໍ່ໄດ້ຮັບອະນຸຍາດຈາກກົມການບິນພົນລະເຮືອນ;

5) 5.000.000 ກີບ ສໍາລັບການນໍາໃຊ້ ດອກໄຟ, ແສງເລເຊີ, ເລົາແສງ ຫຼື ແສງສະທ້ອນ ໃນສະໜາມບິນ, ເດີ່ນບິນ ຫຼື ເຂດອ້ອມຮອບສະໜາມບິນ ທີ່ສົ່ງຜົນກະທົບຕໍ່ການ ຂຶ້ນ-ລົງ ແລະ ການເຄື່ອນໄຫວ ຂອງເຮືອບິນ ໂດຍບໍ່ໄດ້ຮັບອະນຸຍາດຈາກກອງສະໜາມບິນລາວ;

6) 5.000.000 ກີບ ສໍາລັບການ ບໍ່ ປັບປຸງ ແລະ ຍົກລະດັບ ສິ່ງອໍານວຍຄວາມສະດວກ ຫຼື ອຸປະກອນພາຍໃນອາຄານຜູ້ໂດຍສານ ໃນ ສະໜາມບິນ ເພື່ອອໍານວຍຄວາມສະດວກໃຫ້ ຜູ້ອາຍຸສູງ ແລະ ຄົນພິການ;

7) 6.000.000 ກີບ ສໍາລັບການ ເຄື່ອນຍ້າຍ, ປອມແປງ ຫຼື ທໍາລາຍ ເຄື່ອງໝາຍ, ເຄື່ອງໝາຍບອກຈຸດທີ່ຕັ້ງ, ຫຼັກໝາຍເຂດກໍ່ສ້າງ ໃນ ສະໜາມບິນ, ເດີ່ນບິນ;

8) 6.000.000 ກີບ ສໍາລັບການບໍ່ປະເມີນຜົນກະທົບຕໍ່ຄວາມປອດໄພ ໃນ ສະໜາມບິນ, ເດີ່ນບິນ ເມື່ອມີການປ່ຽນແປງ ທາງດ້ານເຕັກນິກ ແລະ ແຜນການບໍລິການ;

9) 8.000.000 ກີບ ສໍາລັບການບໍ່ຈັດຕັ້ງປະຕິບັດແຜນງານປ້ອງກັນ ນົກ, ສັດປ່າ ແລະ ສັດລ້ຽງ ໃນ ສະໜາມບິນ, ເດີ່ນບິນ;

10) 10.000.000 ກີບ ສໍາລັບການ ກໍ່ສ້າງ, ຕິດຕັ້ງ ແລະ ສ້ອມແປງໃຫ່ຍ ວັດຖຸປະກອນ, ສິ່ງອໍານວຍຄວາມສະດວກ ໃນ ສະໜາມບິນ, ເດີ່ນບິນ ໂດຍບໍ່ໄດ້ຮັບອະນຸຍາດຈາກກົມການບິນພົນລະເຮືອນ;

11) 10.000.000 ກີບ ສໍາລັບການນໍາໃຊ້ ປຶ້ມຄູ່ມື ສະໜາມບິນ, ເດີ່ນບິນ ທີ່ບໍ່ໄດ້ຮັບຮອງຈາກກົມການບິນພົນລະເຮືອນ;

12) 15.000.000 ກີບ ສໍາລັບການ ຕິດຕັ້ງ ຫຼື ນໍາໃຊ້ວັດຖຸທີ່ດຶງດູດ ນົກ, ສັດ ຫຼື ແມງໄມ້ ເຂົ້າໃນ ສະໜາມບິນ, ເດີ່ນບິນ ແລະ ເຂດອ້ອມຮອບສະໜາມບິນ;

13) 15.000.000 ກີບ ສໍາລັບການ ປຸກສ້າງອາຄານ, ກໍ່ສ້າງ ຫຼື ຕິດຕັ້ງ ອຸປະກອນ, ສັນຍາລັກ, ໄຟສັນຍານ, ປ້າຍໂຄສະນາ, ປູກຕົ້ນໄມ້ ທີ່ມີຄວາມສູງ ໃນ ສະໜາມບິນ, ເດີ່ນບິນ ແລະ ເຂດອ້ອມຮອບສະໜາມບິນ ທີ່ເປັນສິ່ງກີດຂວາງ ແລະ ສິ່ງຜົນກະທົບຕໍ່ຄວາມປອດໄພ ການ ຂຶ້ນ-ລົງ ຂອງເຮືອບິນ, ປະຕິບັດການບິນ, ອໍານວຍຄວາມສະດວກພາກພື້ນດິນ ແລະ ບັນຊາຈະລາຈອນທາງອາກາດ;

14) 15.000.000 ກີບ ສໍາລັບການ ຕິດຕັ້ງ ໄຟສັນຍານ, ປ້າຍເຕືອນ, ປ້າຍຫ້າມ ໃນສະໜາມບິນ, ເດີ່ນບິນ ໂດຍບໍ່ຖືກຕ້ອງ ຕາມມາດຕະຖານເຕັກນິກ ຂອງກົມການບິນພົນລະເຮືອນ;

15) 15.000.000 ກີບ ສຳລັບການ ແຕ້ມເສັ້ນເຄື່ອງໝາຍ ໃນ ສະໜາມບິນ, ເດີ່ນບິນ ທີ່ບໍ່ຖືກຕ້ອງ ຕາມມາດຕະຖານເຕັກນິກ ຂອງກົມການບິນພົນລະເຮືອນ;

16) 15.000.000 ກີບ ສຳລັບການບໍ່ປະຕິບັດຕາມ ແຜນດຳເນີນງານ ແລະ ແຜນຜັງລານຈອດ ຂອງ ເຮືອບິນ ທີ່ໄດ້ຮັບຮອງຈາກ ກົມການບິນພົນລະເຮືອນ;

17) 15.000.000 ກີບ ສຳລັບການບໍ່ປະມູນຄັດເລືອກເອົາ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃນການໃຫ້ເຊົ່າບໍລິການສະຖານທີ່ ແລະ ບໍລິການອື່ນ ໃນ ສະໜາມບິນ, ເດີ່ນບິນ ຕາມກົດໝາຍ ແລະ ລະບຽບການ;

18) 20.000.000 ກີບ ສຳລັບການ ບໍ່ ກໍ່ສ້າງ, ບຳລຸງຮັກສາ ແລະ ສ້ອມແປງ ຮົ້ວ ຫຼື ກຳແພງ ໃນ ສະໜາມບິນ, ເດີ່ນບິນ;

19) 25.000.000 ກີບ ສຳລັບການ ຂຸດ ຫຼື ຊີເຈາະ ໃນ ສະໜາມບິນ, ເດີ່ນບິນ ໂດຍບໍ່ໄດ້ຮັບອະນຸຍາດ;

20) 25.000.000 ກີບ ສຳລັບການບໍ່ ມອບພື້ນທີ່ຄືນ, ຍົກຍ້າຍ ວັດສະດຸ, ກົນຈັກ ແລະ ວັດຖຸປະກອນ ຂອງຜູ້ຮັບເໝົາອອກຈາກ ສະໜາມບິນ, ເດີ່ນບິນ ພາຍຫຼັງໂຄງການກໍ່ສ້າງສຳເລັດ ແລະ ໄດ້ ມອບ-ຮັບ ແລ້ວ;

21) 25.000.000 ກີບ ສຳລັບການບໍ່ປະຕິບັດຕາມແຜນດຳເນີນການ ກໍ່ສ້າງ, ປັບປຸງ, ຍົກລະດັບ ຫຼື ສ້ອມແປງ ໃນ ສະໜາມບິນ, ເດີ່ນບິນ ທີ່ໄດ້ຮັບຮອງຈາກກົມການບິນພົນລະເຮືອນ;

22) 25.000.000 ກີບ ສຳລັບການນຳໃຊ້ທີ່ດິນຂອງ ສະໜາມບິນ, ເດີ່ນບິນ ໂດຍບໍ່ຖືກຕ້ອງຕາມ ຈຸດປະສົງ ຫຼື ເປົ້າໝາຍ;

23) 25.000.000 ກີບ ສຳລັບການ ເປີດນຳໃຊ້ ຫຼື ປິດຊົ່ວຄາວ ສິ່ງອຳນວຍຄວາມສະດວກ ຫຼື ໂຄງ ລ່າງພື້ນຖານສ່ວນໃດສ່ວນໜຶ່ງຂອງ ສະໜາມບິນ, ເດີ່ນບິນ ບໍ່ຖືກຕ້ອງ ຕາມລະບຽບການ ຂອງກົມການບິນ ພົນລະເຮືອນ;

24) 25.000.000 ກີບ ສຳລັບການ ບຸກລຸກ ຫຼື ຄອບຄອງ ທີ່ດິນຂອງ ສະໜາມບິນ, ເດີ່ນບິນ;

25) 25.000.000 ກີບ ສຳລັບການບໍ່ປະຕິບັດຕາມເງື່ອນໄຂການໃຫ້ການບໍລິການ ສະໜາມບິນ, ເດີ່ນບິນ ຢ່າງຄົບຖ້ວນ ຕາມປຶ້ມຄູ່ມື ສະໜາມບິນ, ເດີ່ນບິນ ທີ່ໄດ້ຮັບຮອງຈາກກົມການບິນພົນລະເຮືອນ;

26) 30.000.000 ກີບ ສຳລັບການບໍ່ທົດສອບຄ່າສຳປະສິດແຮງຮຸກຖູຂອງໜ້າທາງ ຂຶ້ນ-ລົງ ຂອງ ເຮືອບິນ;

27) 30.000.000 ກີບ ສຳລັບການບໍ່ ຕິດຕາມ ກວດກາ, ບຳລຸງຮັກສາ ແລະ ສ້ອມແປງ ທາງ ຂຶ້ນ-ລົງ, ທາງຂັບເຄື່ອນ ແລະ ລານຈອດເຮືອບິນ ໃນ ສະໜາມບິນ, ເດີ່ນບິນ ໃຫ້ຢູ່ໃນສະພາບດີ;

28) 35.000.000 ກີບ ສຳລັບການ ຂາຍ, ໃຫ້ເຊົ່າ, ຫັນປ່ຽນກຳມະສິດ, ໂອນ, ບໍລິຈາກ, ຈຳນຳທີ່ດິນ ທີ່ເປັນຊັບສິນຂອງລັດມາເປັນກຳມະສິດຂອງຕົນ ໂດຍບໍ່ໄດ້ຮັບອະນຸຍາດ;

29) 35.000.000 ກີບ ສຳລັບການ ກໍ່ສ້າງ, ປຸກສ້າງ, ຕິດຕັ້ງ, ບູລະນະຮັກສາ ແລະ ສ້ອມແປງ, ຕໍ່ເຕີມ ອາຄານ ຫຼື ອົງປະກອບ ຂອງອາຄານ, ສິ່ງອຳນວຍຄວາມສະດວກ, ວັດຖຸປະກອນ ໃນ ສະໜາມບິນ, ເດີ່ນບິນ ໂດຍບໍ່ໄດ້ຮັບອະນຸຍາດຈາກກົມການບິນພົນລະເຮືອນ;

30) 45.000.000 ກີບ ສຳລັບການໃຫ້ການບໍລິການ ສະໜາມບິນ, ເດີ່ນບິນ ໂດຍບໍ່ມີ ໃບຢັ້ງຢືນ ສະ ໜາມບິນ, ເດີ່ນບິນ ຈາກກົມການບິນພົນລະເຮືອນ.

**ມາດຕາ 19 ການລະເມີດລະບຽບການກ່ຽວກັບການໃຫ້ການບໍລິການ ສະໜາມບິນ, ເດີ່ນບິນ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດລະບຽບການກ່ຽວກັບການໃຫ້ການບໍລິການ ສະໜາມບິນ, ເດີ່ນບິນ ຈະຖືກປັບໃໝ ດັ່ງນີ້:

1) 1.000.000 ກີບ ສຳລັບການບໍ່ແຈ້ງ ລາຄາສິນຄ້າ ແລະ ຄ່າໃຫ້ບໍລິການອື່ນ ໃນ ສະໜາມບິນ, ເດີ່ນບິນ;

2) 1.000.000 ກີບ ສຳລັບການຕິດປ້າຍໂຄສະນາ ໃສ່ຍານພາຫະນະ ທີ່ກຳລັງປະຕິບັດງານຢູ່ໃນເຂດພື້ນທີ່ຈຳກັດຂອງ ສະໜາມບິນ, ເດີ່ນບິນ ໂດຍບໍ່ໄດ້ຮັບອະນຸຍາດ;

3) 2.000.000 ກີບ ສຳລັບການບໍ່ຕິດຕັ້ງຕູ້ນ້ຳດື່ມສາທາລະນະ ສະອາດ ແລະ ປອດໄພ ຢູ່ອາຄານຜູ້ໂດຍສານ ຂອງ ສະໜາມບິນ, ເດີ່ນບິນ;

4) 3.000.000 ກີບ ສຳລັບການບໍ່ມີລະບົບ ຕິດຕັ້ງ ປ້າຍເອເລັກໂຕຣນິກ ຫຼື ອັດຖຸປະກອນ ທີ່ເໝາະສົມໃນການແຈ້ງຂໍ້ມູນກ່ຽວກັບຖ້ຽວບິນ ໃນອາຄານຜູ້ໂດຍສານ ຂອງ ສະໜາມບິນ, ເດີ່ນບິນ;

5) 3.000.000 ກີບ ສຳລັບການນຳໃຊ້ ໃບປິວ, ປ່າວຂ່າວ, ໂຄສະນາຊວນເຊື່ອ ທີ່ສ້າງຄວາມເສຍຫາຍໃຫ້ແກ່ການໃຫ້ການບໍລິການ ໃນ ສະໜາມບິນ, ເດີ່ນບິນ;

6) 3.000.000 ກີບ ສຳລັບການນຳໃຊ້ວັດຖຸປະກອນ ຢູ່ລານຈອດຂອງເຮືອບິນ ທີ່ສົ່ງຜົນກະທົບຕໍ່ການປະຕິບັດງານຂອງຖ້ຽວບິນ, ຍານພາຫະນະ ແລະ ສິ່ງອຳນວຍຄວາມສະດວກອື່ນ;

7) 5.000.000 ກີບ ສຳລັບການຂາຍເຄື່ອງຢູ່ພື້ນທີ່ສາທາລະນະ ຂອງ ສະໜາມບິນ, ເດີ່ນບິນ ໂດຍບໍ່ໄດ້ຮັບອະນຸຍາດ;

8) 5.000.000 ກີບ ສຳລັບການບໍ່ມີ ລະບົບຄວບຄຸມ ການຈອດລົດທົ່ວໄປ ແລະ ລົດແທັກຊີ ໃນສະໜາມບິນ, ເດີ່ນບິນ;

9) 7.000.000 ກີບ ສຳລັບການບໍ່ລາຍງານສະຖິຕິກ່ຽວກັບ ຖ້ຽວບິນ, ຈຳນວນຜູ້ໂດຍສານ ແລະ ສິນຄ້າ ຂອງຜູ້ໃຫ້ບໍລິການ ສະໜາມບິນ, ເດີ່ນບິນ;

10) 8.000.000 ກີບ ສຳລັບການ ຊື້-ຂາຍ ສິນຄ້າເກືອດຫ້າມ ຕາມລະບຽບການ ໃນ ສະໜາມບິນ, ເດີ່ນບິນ;

11) 8.000.000 ກີບ ສຳລັບການໂຈະການໃຫ້ບໍລິການ ສະໜາມບິນ, ເດີ່ນບິນ ໂດຍບໍ່ມີການລາຍງານໃຫ້ ກົມການບິນພົນລະເຮືອນ ຊຶ່ງເຮັດໃຫ້ການປະຕິບັດການບິນຂາດຄວາມຕໍ່ເນື່ອງ;

12) 10.000.000 ກີບ ສຳລັບການຈັດສັນພື້ນທີ່ໃຫ້ການບໍລິການຢູ່ອາຄານຜູ້ໂດຍສານ ໂດຍບໍ່ປະຕິບັດຕາມ ປຶ້ມຄູ່ມື ສະໜາມບິນ, ເດີ່ນບິນ ທີ່ໄດ້ຮັບຮອງຈາກ ກົມການບິນພົນລະເຮືອນ;

13) 10.000.000 ກີບ ສຳລັບການ ກໍ່ສ້າງ ແລະ ຕິດຕັ້ງປ້າຍເອເລັກໂຕຣນິກ ແລະ ປ້າຍໂຄສະນາ ໃນສະໜາມບິນ, ເດີ່ນບິນ ໂດຍບໍ່ໄດ້ຮັບອະນຸຍາດຈາກ ກົມການບິນພົນລະເຮືອນ;

14) 10.000.000 ກີບ ສຳລັບການເກັບຄ່າທຳນຽມ ແລະ ຄ່າບໍລິການ ສະໜາມບິນ, ເດີ່ນບິນ ທີ່ບໍ່ຖືກຕ້ອງ ຕາມລະບຽບການ;

15) 15.000.000 ກີບ ສຳລັບການບໍ່ຕິດປ້າຍບໍລິສັດລົດແທັກຊີ ແລະ ຄ່າບໍລິການ ໃນ ສະໜາມບິນ, ເດີ່ນບິນ.

16) 20.000.000 ກີບ ສຳລັບການໃຫ້ການບໍລິການການບິນ ໃນ ສະໜາມບິນ, ເດີ່ນບິນ ໂດຍບໍ່ມີໃບອະນຸຍາດຈາກ ກົມການບິນພົນລະເຮືອນ.

### ມາດຕາ 20 ການລະເມີດລະບຽບການກ່ຽວກັບການນຳໃຊ້ ຍານພາຫະນະ, ອັດຖຸປະກອນ ໃນ ສະໜາມບິນ, ເດີ່ນບິນ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດລະບຽບການກ່ຽວກັບການນຳໃຊ້ ຍານພາຫະນະ, ວັດຖຸປະກອນ ໃນ ສະໜາມບິນ, ເດີ່ນບິນ ຈະຖືກປັບໃໝ ດັ່ງນີ້:

1) 500.000 ກີບ ສຳລັບການຂັບຂີ່ຍານພາຫະນະ ໃນ ສະໜາມບິນ, ເດີ່ນບິນ ໂດຍບໍ່ຮັກສາໄລຍະຫ່າງທີ່ປອດໄພຂອງເຮືອບິນ;

2) 600.000 ກີບ ສຳລັບການນັ່ງເກີນຈຳນວນບ່ອນນັ່ງຂອງຍານພາຫະນະ ໃນເວລາປະຕິບັດງານ ໃນສະໜາມບິນ, ເດີ່ນບິນ;

3) 600.000 ກີບ ສໍາລັບການຂັບຂີ່ຍານພາຫະນະ ເກີນຄວາມໄວຈໍາກັດຕາມແຕ່ລະປະເພດຍານພາຫະນະ ໃນເຂດພື້ນທີ່ປອດໄພຂອງເຮືອບິນ;

4) 600.000 ກີບ ສໍາລັບການຂັບຂີ່ຍານພາຫະນະ ເກີນຄວາມໄວຈໍາກັດ ສາມສິບ ກິໂລແມັດ ຕໍ່ຊົ່ວໂມງ ນອກເຂດພື້ນທີ່ປອດໄພຂອງເຮືອບິນ;

5) 600.000 ກີບ ສໍາລັບການບໍ່ນໍາໃຊ້ວິທະຍຸສື່ສານແບບສອງທາງ ໃນເວລາປະຕິບັດໜ້າທີ່ ຂອງນັກວິຊາການເຕັກນິກການບິນ ໃນ ສະໜາມບິນ, ເດີ່ນບິນ;

6) 600.000 ກີບ ສໍາລັບການຢຸດ ຫຼື ຈອດ ຍານພາຫະນະທົ່ວໄປ ບໍ່ຖືກຕ້ອງ ໃນ ສະໜາມບິນ, ເດີ່ນບິນ;

7) 700.000 ກີບ ສໍາລັບການຂັບຂີ່ຍານພາຫະນະ, ບີບແກ ຫຼື ເລັ່ງເຄື່ອງຈັກ ຊຶ່ງສ້າງສຽງລົບກວນ ຍົກເວັ້ນຍານພາຫານະສຸກເສີນ ທີ່ກໍາລັງປະຕິບັດໜ້າທີ່ ໃນ ສະໜາມບິນ, ເດີ່ນບິນ;

8) 700.000 ກີບ ສໍາລັບການບໍ່ເປີດ ໄຟແສງສະຫວ່າງ, ໄຟທ້າຍ, ໄຟສັນຍານ ແລະ ໄຟເຕືອນ ໃນເວລານໍາໃຊ້ຍານພາຫະນະ ແລະ ຄວບຄຸມວັດຖຸປະກອນ ໃນເຂດປະຕິບັດການບິນ;

9) 700.000 ກີບ ສໍາລັບການຂັບຂີ່ຍານພາຫະນະ ສວນທິດທາງການຈະລາຈອນ ໃນເຂດທີ່ມີຊ່ອງຈະລາຈອນທິດທາງດຽວ ໃນ ສະໜາມບິນ, ເດີ່ນບິນ;

10) 800.000 ກີບ ສໍາລັບການຂັບຂີ່ຍານພາຫະນະ ໂດຍບໍ່ຫຼຸດຜ່ອນຄວາມໄວ ຫຼື ບໍ່ເປີດໄຟສັນຍານ ໃນເວລາປ່ຽນທິດທາງ, ປ່ຽນຊ່ອງຈະລາຈອນ ຫຼື ຊີ່ງຂຶ້ນໜ້າ ຢູ່ເຂດຫ້າມຊີ່ງ ໃນ ສະໜາມບິນ, ເດີ່ນບິນ;

11) 900.000 ກີບ ສໍາລັບການນໍາໃຊ້ຍານພາຫະນະ ໃນເວລາປະຕິບັດງານ ໂດຍບໍ່ມີໄຟແສງສະຫວ່າງ, ໄຟທ້າຍ, ໄຟປ້າຍທະບຽນ, ປ້າຍທະບຽນ, ໄຟຫ້າມລໍ້, ໄຟສັນຍານລ້ຽວ, ໄຟເຕືອນ, ຟອຍປັດນໍ້າຝົນ, ກະຈົກສ່ອງຂ້າງ-ສ່ອງຫຼັງ ແລະ ວັດຖຸປະກອນສຸກເສີນ ໃນ ສະໜາມບິນ, ເດີ່ນບິນ;

12) 900.000 ກີບ ສໍາລັບການຂັບຂີ່ຍານພາຫະນະ ໂດຍບໍ່ປະຕິບັດຕາມການໃຫ້ສັນຍານ ແລະ ຄໍາແນະນໍາ ຂອງນັກວິຊາການສະໜາມບິນ ໃນ ສະໜາມບິນ, ເດີ່ນບິນ;

13) 1.000.000 ກີບ ສໍາລັບການບໍ່ສື່ສານກັບ ນັກບັນຊາການຈະລາຈອນທາງອາກາດ ຢ່າງຕໍ່ເນື່ອງ ໃນເວລາປະຕິບັດງານ ໃນ ສະໜາມບິນ, ເດີ່ນບິນ;

14) 1.000.000 ກີບ ສໍາລັບການ ຈອດຍານພາຫະນະບໍລິການພາກພື້ນດິນ, ເກັບມ້ຽນ ສິ່ງຂອງ, ສິ່ງອໍານວຍຄວາມສະດວກ ຫຼື ວັດຖຸປະກອນ ບໍ່ຖືກຕ້ອງ ໃນ ສະໜາມບິນ, ເດີ່ນບິນ;

15) 2.000.000 ກີບ ສໍາລັບການບໍ່ຍົກຍ້າຍສິ່ງກີດຂວາງ ຫຼື ບໍ່ປະຕິບັດຕາມຄໍາແນະນໍາ ຂອງນັກບັນຊາການຈະລາຈອນທາງອາກາດໃນເວລາປະຕິບັດງານ ໃນ ສະໜາມບິນ, ເດີ່ນບິນ;

16) 2.000.000 ກີບ ສໍາລັບການເຄື່ອນຍ້າຍເຮືອບິນຢູ່ທາງ ຂຶ້ນ-ລົງ, ທາງຂັບເຄື່ອນ ໂດຍບໍ່ໄດ້ຮັບການອະນຸຍາດຈາກນັກບັນຊາການຈະລາຈອນທາງອາກາດ;

17) 2.000.000 ກີບ ສໍາລັບການນໍາໃຊ້ ຍານພາຫະນະ ທີ່ບໍ່ມີເອກະສານເຕັກນິກຄົບຖ້ວນ ຫຼື ໝົດອາຍຸ ແລະ ນໍາໃຊ້ ວັດຖຸປະກອນ ທີ່ບໍ່ໄດ້ມາດຕະຖານເຕັກນິກ ເຂົ້າປະຕິບັດງານ ໃນ ສະໜາມບິນ, ເດີ່ນບິນ;

18) 6.000.000 ກີບ ສໍາລັບການ ບໍາລຸງຮັກສາ, ສ້ອມແປງ ຍານພາຫະນະ, ວັດຖຸປະກອນ ຢູ່ເຂດຫວງຫ້າມຂອງ ສະໜາມບິນ, ເດີ່ນບິນ;

19) 8.000.000 ກີບ ສໍາລັບການບໍ່ຫຼີກ ຫຼື ບໍ່ເປີດທາງໃຫ້ ຍານພາຫະນະສຸກເສີນ ທີ່ກໍາລັງປະຕິບັດໜ້າທີ່ ໃນ ສະໜາມບິນ, ເດີ່ນບິນ;

20) 10.000.000 ກີບ ສໍາລັບການບໍ່ປະຕິບັດຕາມຄໍາແນະນໍາຕາມ ປ້າຍ, ເຄື່ອງໝາຍ ແລະ ໄຟສັນຍານ;

21) 10.000.000 ກີບ ສໍາລັບການນໍາໃຊ້ຍານພາຫະນະ ຢູ່ທາງ ຂຶ້ນ-ລົງ ເຮືອບິນ, ທາງຂັບເຄື່ອນ ໂດຍບໍ່ໄດ້ຮັບອະນຸຍາດຈາກ ກົມການບິນພົນລະເຮືອນ;

22) 15.000.000 ກີບ ສໍາລັບການນໍາເອົາ ຍານພາຫະນະ ຫຼື ວັດຖຸປະກອນ ທີ່ຜະລິດ ຫຼື ດັດແປງ ຄືນໃໝ່ ເຂົ້າປະຕິບັດງານ ໃນ ສະໜາມບິນ, ເດີ່ນບິນ ໂດຍບໍ່ໄດ້ຮັບອະນຸຍາດຈາກກົມການບິນພົນລະເຮືອນ;

23) 25.000.000 ກີບ ສໍາລັບການຂັບຂີ່ຍານພາຫະນະ ເຂົ້າໃນລານຈອດເຮືອບິນ ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ບໍ່ຖືກຕ້ອງຕາມເສັ້ນທາງທີ່ກໍານົດ.

**ມາດຕາ 21 ການລະເມີດລະບຽບການກ່ຽວກັບການປ້ອງກັນໄພພິບັດທໍາມະຊາດ ແລະ ເຫດການສຸກເສີນ ໃນ ສະໜາມບິນ, ເດີ່ນບິນ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດລະບຽບການກ່ຽວກັບການປ້ອງກັນໄພພິບັດທໍາມະຊາດ ແລະ ເຫດການສຸກເສີນ ໃນ ສະໜາມບິນ, ເດີ່ນບິນ ຈະຖືກປັບໃໝ ດັ່ງນີ້:

1) 5.000.000 ກີບ ສໍາລັບການ ບໍ່ ຕິດຕາມ ກວດກາ, ບໍາລຸງຮັກສາ ແລະ ສ້ອມແປງ ລະບົບຢຶດຈ່ອງເຮືອບິນ ຢູ່ລານຈອດເຮືອບິນ ແລະ ລະບົບລະບາຍນໍ້າ ໃນ ສະໜາມບິນ, ເດີ່ນບິນ;

2) 8.000.000 ກີບ ສໍາລັບການບໍ່ກະກຽມ ຍານພາຫະນະ ແລະ ວັດຖຸປະກອນ ທີ່ຈໍາເປັນ ໃນການປ້ອງກັນໄພພິບັດທໍາມະຊາດ ໃນ ສະໜາມບິນ, ເດີ່ນບິນ;

3) 15.000.000 ກີບ ສໍາລັບການບໍ່ປະຕິບັດແຜນ ປ້ອງກັນໄພພິບັດທໍາມະຊາດ ແລະ ຮັບມືກັບເຫດການສຸກເສີນ ໃນ ສະໜາມບິນ, ເດີ່ນບິນ ແລະ ເຂດອ້ອມຮອບສະໜາມບິນ;

4) 15.000.000 ກີບ ສໍາລັບການບໍ່ບໍາລຸງຮັກສາລະບົບມອດໄຟ ຕາມມາດຕະຖານເຕັກນິກ ຂອງແຕ່ລະປະເພດ ສະໜາມບິນ, ເດີ່ນບິນ ແລະ ບໍ່ແຈ້ງຂໍ້ມູນດັ່ງກ່າວເຂົ້າໃນ ຂໍ້ມູນຂ່າວສານການບິນ.

## ໝວດທີ 6
## ການປັບໃໝຕໍ່ຜູ້ລະເມີດລະບຽບການກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ໃນ ເຮືອບິນ, ສະໜາມບິນ, ເດີ່ນບິນ

**ມາດຕາ 22 ການລະເມີດລະບຽບການກ່ຽວກັບການປົກປັກຮັກສາສິ່ງແວດລ້ອມໃນເຮືອບິນ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດລະບຽບການກ່ຽວກັບການປົກປັກຮັກສາສິ່ງແວດລ້ອມໃນເຮືອບິນ ຈະຖືກປັບໃໝ ດັ່ງນີ້:

1) 3.000.000 ກີບ ສໍາລັບການສູບຢາ, ສູບຢາເອເລັກໂຕຣນິກ ຢູ່ໃນເຮືອບິນ;

2) 3.000.000 ກີບ ສໍາລັບການບໍ່ຂ້າເຊື້ອພະຍາດຈາກ ຂີ້ເຫຍື້ອ, ສິ່ງເສດເຫຼືອ ໃນເຮືອບິນ ຕາມຄໍາແນະນໍາຂອງແພດສະໜາມບິນ;

3) 6.000.000 ກີບ ສໍາລັບການບໍ່ປະຕິບັດລະບຽບການ ກ່ຽວກັບຂັ້ນຕອນໃນການຄວບຄຸມການ ເກັບ ແລະ ແຍກປະເພດ ຂອງຂີ້ເຫຍື້ອທີ່ເກີດຈາກເຮືອບິນ;

4) 6.000.000 ກີບ ສໍາລັບການນໍາໃຊ້ ສານເຄມີ, ຢາຂ້າແມງໄມ້, ຂ້າເຊື້ອພະຍາດ ແລະ ນໍ້າຢາທໍາຄວາມສະອາດໃນເຮືອບິນ ບໍ່ຖືກຕ້ອງຕາມ ປະລິມານ ແລະ ວິທີນໍາໃຊ້ ທີ່ໄດ້ຮັບອະນຸຍາດຈາກຂະແໜງການສາທາລະນະສຸກ;

5) 15.000.000 ກີບ ສໍາລັບການນໍາໃຊ້ເຮືອບິນທີ່ປ່ອຍອາຍເສຍເກີນມາດຕະຖານ ທີ່ກໍານົດໄວ້ໃນສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 23 ການລະເມີດລະບຽບການກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ໃນ ສະໜາມບິນ, ເດີ່ນບິນ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດລະບຽບການກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ໃນ ສະໜາມບິນ, ເດີ່ນບິນ ຈະຖືກປັບໃໝ ດັ່ງນີ້:

1) 2.000.000 ກີບ ສໍາລັບການບໍ່ລາຍງານກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ຕາມລະບຽບການຂອງກົມການບິນພົນລະເຮືອນ;

2) 3.000.000 ກີບ ສໍາລັບການບໍ່ນໍາໃຊ້ມາດຕະການປ້ອງກັນຝຸ່ນລະອອງ ແລະ ປ່ອຍສິ່ງເສດເຫຼືອ ໃນເວລາເກັບມ້ຽນ ຫຼື ຂົນສິ່ງ ສິ່ງເສດເຫຼືອ ທີ່ເປັນຂອງ ແຂງ ແລະ ແຫຼວ;

3) 3.000.000 ສໍາລັບການດໍາເນີນ ທຸລະກິດ ຫຼື ບໍລິການ ໂດຍບໍ່ປະຕິບັດຕາມມາດຕະຖານການ ປົກປັກຮັກສິ່ງແວດລ້ອມ;

4) 4.000.000 ກີບ ສໍາລັບການ ຖິ້ມວັດຖຸ, ກໍາຈັດຂີ້ເຫຍື້ອ ແລະ ສິ່ງເສດເຫຼືອ ໂດຍບໍ່ຖືກວິທີ ແລະ ບ່ອນທີ່ກໍານົດໄວ້;

5) 4.000.000 ກີບ ສໍາລັບການບໍ່ປະຕິບັດຄໍາແນະນໍາການນໍາໃຊ້ ເຄື່ອງກໍາເນີດລັງສີ ແລະ ທາດກໍາມັນ ຕະພາບລັງສີ;

6) 4.000.000 ກີບ ສໍາລັບການບໍ່ປະຕິບັດຕາມເງື່ອນໄຂດ້ານສຸຂານາໄມຂອງອາຄານຜູ້ໂດຍສານ ແລະ ສາງສິນຄ້າ ຕາມລະບຽບການຂອງກົມການບິນພົນລະເຮືອນ;

7) 6.000.000 ກີບ ສໍາລັບການບໍ່ມີ ແຜນການ, ແຜນງານ ກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ;

8) 7.000.000 ກີບ ສໍາລັບການບໍ່ປະຕິບັດຕາມ ແຜນການ, ແຜນງານຝຶກອົບຮົມ ກ່ຽວກັບການ ປົກປັກຮັກສາສິ່ງແວດລ້ອມ;

9) 10.000.000 ກີບ ສໍາລັບການນໍາໃຊ້ ຍານພາຫະນະ ຫຼື ວັດຖຸປະກອບ ໃນການກໍາຈັດ, ຂົນສົ່ງສິ່ງ ເສດເຫຼືອ, ເຄມີທີ່ເປັນພິດ ແລະ ອັນຕະລາຍ ບໍ່ຖືກຕ້ອງຕາມປະເພດທີ່ໄດ້ກໍານົດ;

10) 15.000.000 ກີບ ສໍາລັບການນໍາເອົາເຄື່ອງກໍາເນີດລັງສີ ແລະ ທາດກໍາມັນຕະພາບລັງສີ ນໍາໃຊ້ ໂດຍ ບໍ່ໄດ້ຮັບອະນຸຍາດຈາກກົມການບິນພົນລະເຮືອນ.

## ໝວດທີ 7
## ການປັບໃໝຕໍ່ຜູ້ລະເມີດລະບຽບການກ່ຽວກັບການປະຕິບັດໜ້າທີ່ ແລະ ການຄຸ້ມຄອງ ພະນັກງານເຕັກນິກການບິນ

### ມາດຕາ 24 ການລະເມີດລະບຽບການກ່ຽວກັບການປະຕິບັດໜ້າທີ່ ຂອງພະນັກງານເຕັກນິກການບິນ

ພະນັກງານເຕັກນິກການບິນ ທີ່ລະເມີດລະບຽບການກ່ຽວກັບການປະຕິບັດໜ້າທີ່ ຈະຖືກປັບໃໝ ດັ່ງນີ້:

1) 500.000 ກີບ ສໍາລັບການນໍາໃຊ້ໂທລະສັບມືຖື ໃນເວລາ ບັນຊາການຈະລາຈອນທາງອາກາດ;

2) 500.000 ກີບ ສໍາລັບການນໍາໃຊ້ໂທລະສັບມືຖື ຫຼື ເຄື່ອງເອເລັກໂຕຣນິກ ໃນເວລາຂັບຂີ່ ຍານພາຫະນະ, ໃນເວລາປະຕິບັດໜ້າທີ່ ແລະ ປະຕິບັດການບິນ ທີ່ບໍ່ຕິດພັນກັບວຽກງານ ໃນ ສະໜາມບິນ, ເດີ່ນບິນ;

3) 1.000.000 ກີບ ສໍາລັບການບໍ່ປະຕິບັດຕາມ ປຶ້ມຄູ່ມືປະຕິບັດການບິນ;

4) 1.500.000 ກີບ ສໍາລັບການບໍ່ມີໃບອະນຸຍາດການປະຕິບັດໜ້າທີ່ ຫຼື ໃບອະນຸຍາດໝົດອາຍຸ;

5) 1.500.000 ກີບ ສໍາລັບການປະກອບເອກະສານ ຫຼື ສະໜອງຂໍ້ມູນ ທີ່ບໍ່ມີມູນຄວາມຈິງ ໃນ ການສະເໜີຂໍໃບອະນຸຍາດປະຕິບັດໜ້າທີ່ ຫຼື ໃບຢັ້ງຢືນວິຊາຊີບ;

6) 2.000.000 ກີບ ສໍາລັບການປະຕິບັດໜ້າທີ່ ເກີນກໍານົດເວລາເຮັດວຽກ ແລະ ພັກຜ່ອນບໍ່ພຽງພໍ ຂອງ ຈຸບິນ, ຈຸຫ້ອງໂດຍສານ, ນັກບັນຊາການຈະລາຈອນທາງອາກາດ ແລະ ນັກວິຊາການເຕັກນິກການບິນ;

7) 3.000.000 ກີບ ສໍາລັບການດື່ມເຄື່ອງດື່ມທີ່ມີທາດເຫຼົ້າ ຫຼື ກວດພົບ ປະລິມານທາດເຫຼົ້າ ໃນ ຮ່າງກາຍ ຂອງພະນັກງານເຕັກນິກການບິນ ໃນເວລາປະຕິບັດໜ້າທີ່;

8) 3.000.000 ກີບ ສໍາລັບການບໍ່ປະຕິບັດຕາມຄໍາແນະນໍາຂອງຄູຝຶກ ທີ່ມີຄວາມສ່ຽງຕໍ່ຄວາມປອດ ໄພການບິນ;

9) 3.000.000 ກີບ ສໍາລັບການບໍ່ປະຕິບັດລະບຽບການກ່ຽວກັບ ເສັ້ນທາງບິນ ແລະ ຂັ້ນຕອນໃນ ການປະຕິບັດການບິນ ທີ່ເປັນໄພຂົ່ມຂູ່ຕໍ່ຄວາມປອດໄພ ແລະ ການປ້ອງກັນຄວາມປອດໄພການບິນ;

10) 5.000.000 ກີບ ສໍາລັບການບໍ່ປະຕິບັດໜ້າທີ່ ຕາມວິຊາຊີບທີ່ໄດ້ຮັບອະນຸຍາດ;

11) 5.000.000 ກີບ ສໍາລັບການບໍ່ ສ້າງແຜນ, ຖານຂໍ້ມູນ ໃນການບໍາລຸງຮັກສາ ແລະ ສ້ອມແປງ ເຮືອບິນ ແລະ ວັດຖຸປະກອບ ຕາມປື້ມຄູ່ມືປະຕິບັດການບິນ, ບັນຊາການຈາລະຈອນທາງອາກາດ;

12) 10.000.000 ກີບ ສໍາລັບການບໍ່ປະຕິບັດຕາມຄໍາສັ່ງ ຂອງນັກບັນຊາການຈະລາຈອນທາງ ອາກາດ ແລະ ຄໍາແນະນໍາຂອງນັກວິຊາການສະໜາມບິນ ໃນເວລາເຄື່ອນໄຫວຢູ່ໃນ ທາງຂັບເຄື່ອນ, ລານຈອດ ເຮືອບິນ ແລະ ລະບົບນໍາເຮືອບິນເຂົ້າຈອດ;

13) 15.000.000 ກີບ ສໍາລັບການ ປ່ອຍ ຫຼື ຖິ້ມ ນໍ້າມັນ, ເຄື່ອງຂອງ, ສິນຄ້າ ຫຼື ວັດຖຸອື່ນ ອອກ ຈາກເຮືອບິນ ໂດຍບໍ່ໄດ້ຮັບອະນຸຍາດຈາກນັກບັນຊາການຈະລະຈອນທາງອາກາດ.

**ມາດຕາ 25 ການລະເມີດລະບຽບການກ່ຽວກັບການຄຸ້ມຄອງພະນັກງານເຕັກນິກການບິນ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດລະບຽບການ ຄຸ້ມຄອງພະນັກງານເຕັກນິກການບິນ ຈະຖືກປັບໃໝ ດັ່ງນີ້:

1) 3.000.000 ກີບ ສໍາລັບການບໍ່ ບັນຈຸ, ສັບຊ້ອນພະນັກງານເຕັກນິກການບິນໃຫ້ພຽງພໍ ຫຼື ນໍາໃຊ້ ພະນັກງານທີ່ບໍ່ມີ ໃບອະນຸຍາດປະຕິບັດໜ້າທີ່, ໃບຢັ້ງຢືນວິຊາຊີບ,ໃບຢັ້ງຢືນສຸຂະພາບ, ໃບຢັ້ງຢືນລະດັບ ພາສາອັງກິດ ແລະ ບໍ່ຖືກຕ້ອງຕາມວິຊາສະເພາະ;

2) 4.000.000 ກີບ ສໍາລັບການບໍ່ປະຕິບັດຕາມກໍານົດ ເວລາເຮັດວຽກ ແລະ ເວລາພັກຜ່ອນ ຂອງ ພະນັກງານເຕັກນິກການບິນ;

3) 5.000.000 ກີບ ສໍາລັບການບໍ່ປຽນຜຽນປະຕິບັດໜ້າທີ່ ຕາມກໍານົດເວລາເຮັດວຽກ;

4) 7.000.000 ກີບ ສໍາລັບການບໍ່ປະຕິບັດຕາມຂັ້ນຕອນໃນການ ຕິດຕາມ ກວດກາ ດ້ານຄວາມ ປອດໄພ ແລະ ຄວບຄຸມຄຸນນະພາບຂອງວຽກງານ.

## ໝວດທີ 8
## ການປັບໃໝຕໍ່ຜູ້ລະເມີດລະບຽບການກ່ຽວກັບການຝຶກອົບຮົມ ແລະ ປະເມີນລະດັບພາສາອັງກິດ ຂອງພະນັກງານເຕັກນິກການບິນ

**ມາດຕາ 26 ການລະເມີດລະບຽບການກ່ຽວກັບການຝຶກອົບຮົມ ໃຫ້ພະນັກງານເຕັກນິກການບິນ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດລະບຽບການຝຶກອົບຮົມ ຈະຖືກປັບໃໝ ດັ່ງນີ້:

1) 4.000.000 ກີບ ສໍາລັບການບໍ່ເກັບຮັກສາເອກະສານຝຶກອົບຮົມ ໃຫ້ພະນັກງານເຕັກນິກ ການບິນ;

2) 5.000.000 ກີບ ສໍາລັບການບໍ່ ຈັດຝຶກອົບຮົມ, ຍົກລະດັບ ໃຫ້ພະນັກງານເຕັກນິກການບິນ ຕາມ ແຜນການ, ແຜນງານ;

3) 8.000.000 ກີບ ສໍາລັບການ ຝຶກອົບຮົມ, ຍົກລະດັບ ໃຫ້ພະນັກງານເຕັກນິກການບິນ ຂອງຕົນ ໂດຍບໍ່ຖືກຕ້ອງຕາມ ຫຼັກສູດ ແລະ ໄລຍະເວລາ;

4) 9.000.000 ກີບ ສໍາລັບການນໍາໃຊ້ຄູຝຶກທີ່ບໍ່ໄດ້ມາດຕະຖານ ແລະ ເງື່ອນໄຂ ໃນການຝຶກ ອົບຮົມ, ຍົກລະດັບ, ປະເມີນລະດັບພາສາອັງກິດ ໃຫ້ພະນັກງານເຕັກນິກການບິນ;

5) 10.000.000 ກີບ ສໍາລັບການຝຶກອົບຮົມໃຫ້ພະນັກງານເຕັກນິກການບິນ ໂດຍບໍ່ສອດຄ່ອງຕາມ ທີ່ໄດ້ຮັບອະນຸຍາດ ຈາກກົມການບິນພົນລະເຮືອນ;

6) 20.000.000 ກີບ ສໍາລັບຜູ້ໃຫ້ບໍລິການຝຶກອົບຮົມ ທີ່ບໍ່ປະຕິບັດຕາມ ມາດຕະຖານ, ຫຼັກສູດ, ເງື່ອນໄຂ ແລະ ສິ່ງອໍານວຍຄວາມສະດວກ ທີ່ໄດ້ຮັບຮອງຈາກກົມການບິນພົນລະເຮືອນ.

**ມາດຕາ 27 ການລະເມີດລະບຽບການກ່ຽວກັບການປະເມີນລະດັບພາສາອັງກິດ ຂອງພະນັກງານເຕັກນິກການບິນ**

ຈູບິນ, ນັກບັນຊາການຈະລາຈອນທາງອາກາດ ທີ່ລະເມີດລະບຽບການກ່ຽວກັບການປະເມີນລະດັບພາສາອັງກິດ ຈະຖືກປັບໃໝ ດັ່ງນີ້:

1) 2.000.000 ກີບ ສໍາລັບການບໍ່ເຂົ້າຮັບການປະເມີນລະດັບພາສາອັງກິດ ຕາມລະບຽບການຂອງກົມການບິນພົນລະເຮືອນ;

2) 3.000.000 ກີບ ສໍາລັບການໃຫ້ຄົນອື່ນສອບເສັງແທນ ຫຼື ມີການທຸດຈະລິດໃນການສອບເສັງ.

## ໝວດທີ 9
## ການປັບໃໝຕໍ່ຜູ້ລະເມີດລະບຽບການກ່ຽວກັບການກວດ ແລະ ປະເມີນ ສຸຂະພາບ

**ມາດຕາ 28 ການລະເມີດລະບຽບການກ່ຽວກັບການກວດສຸຂະພາບ ຂອງພະນັກງານເຕັກນິກການບິນ**

ພະນັກງານເຕັກນິກການບິນ ທີ່ລະເມີດລະບຽບການກວດສຸຂະພາບ ຈະຖືກປັບໃໝ ດັ່ງນີ້:

1) 2.000.000 ກີບ ສໍາລັບການປະກອບຂໍ້ມູນທີ່ບໍ່ມີມູນຄວາມຈິງໃນເວລາກວດສຸຂະພາບ;

2) 3.000.000 ກີບ ສໍາລັບການບໍ່ກວດສຸຂະພາບ ຕາມການແນະນໍາ ຂອງແພດການບິນ;

3) 5.000.000 ກີບ ສໍາລັບການບໍ່ມີໃບຢັ້ງຢືນສຸຂະພາບ ຫຼື ໃບຢັ້ງຢືນໝົດອາຍຸ ໃນເວລາປະຕິບັດໜ້າທີ່.

**ມາດຕາ 29 ການລະເມີດລະບຽບການກ່ຽວກັບການປະເມີນສຸຂະພາບ ຂອງແພດການບິນ**

ແພດການບິນ ທີ່ລະເມີດລະບຽບການກ່ຽວກັບການປະເມີນສຸຂະພາບ ຈະຖືກປັບໃໝ ດັ່ງນີ້:

1) 5.000.000 ກີບ ສໍາລັບການບໍ່ເກັບຮັກສາຜົນກວດສຸຂະພາບ;

2) 10.000.000 ກີບ ສໍາລັບການຮັບຮອງຜົນກວດສຸຂະພາບ ທີ່ບໍ່ຖືກຕ້ອງ;

3) 15.000.000 ກີບ ສໍາລັບການຈັດຫາແພດກວດສຸຂະພາບ ທີ່ບໍ່ມີປະກາສະນີຍະບັດການແພດ ຫຼື ໃບຢັ້ງຢືນວິຊາຊີບການແພດ ໃຫ້ພະນັກງານເຕັກນິກການບິນ.

## ໝວດທີ 10
## ການປັບໃໝຕໍ່ຜູ້ລະເມີດລະບຽບການກ່ຽວກັບການຈະລາຈອນທາງອາກາດ

**ມາດຕາ 30 ການລະເມີດລະບຽບການກ່ຽວກັບການອໍານວຍຄວາມສະດວກການຈະລາຈອນທາງອາກາດ**

ບຸກຄົນ, ນິຕິບຸກຄົນ ທີ່ລະເມີດລະບຽບການກ່ຽວກັບການອໍານວຍຄວາມສະດວກການຈະລາຈອນທາງອາກາດ ຈະຖືກປັບໃໝ ດັ່ງນີ້:

1) 10.000.000 ກີບ ສໍາລັບການບໍ່ກວດກາ ແລະ ທຽບຖຽງຄ່າມາດຕະຖານຂອງເຄື່ອງ ກວດກາ, ບໍາລຸງຮັກສາ ແລະ ສ້ອມແປງ ວັດຖຸປະກອນ ແລະ ລະບົບເຕັກນິກທາງດ້ານຈະລາຈອນທາງອາກາດ;

2) 15.000.000 ກີບ ສໍາລັບການນໍາໃຊ້ລະບົບເຕັກນິກ ແລະ ວັດຖຸປະກອນ ທີ່ບໍ່ຖືກຕ້ອງ;

3) 15.000.000 ກີບ ສໍາລັບການບໍ່ປະຕິບັດຕາມປື້ມຄູ່ມື ກ່ຽວກັບການປະຕິບັດງານ, ການບັນຊາການຈະລາຈອນທາງອາກາດ, ການບໍາລຸງຮັກສາວັດຖຸປະກອນ ແລະ ສິ່ງອໍານວຍຄວາມສະດວກ;

4) 20.000.000 ກີບ ສໍາລັບການບໍ່ລາຍງານສະຖິຕິ ກ່ຽວກັບ ການຈະລາຈອນທາງອາກາດ;

5) 25.000.000 ກີບ ສໍາລັບການບໍ່ແຈ້ງໃຫ້ພາກສ່ວນ ຊອກຄົ້ນ ແລະ ກູ້ໄພ ໃຫ້ທັນທີທັນໃດເມື່ອໄດ້ຮັບ ສັນຍານ, ແຈ້ງຂໍ້ມູນ ຂອງເຮືອບິນ ໃນສະຖານະການສຸກເສີນ ຫຼື ເກີດໄພອັນຕະລາຍ.

**ມາດຕາ 31 ການລະເມີດລະບຽບການກ່ຽວກັບການຄຸ້ມຄອງການຈະລາຈອນທາງອາກາດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດລະບຽບການກ່ຽວກັບການຄຸ້ມຄອງການຈະລາຈອນທາງອາກາດ ຈະຖືກປັບໃໝ ດັ່ງນີ້:

1) 5.000.000 ກີບ ສໍາລັບການນໍາໃຊ້ຄື້ນຄວາມຖີ່ອື່ນ ທີ່ລົບກວນຄື້ນຄວາມຖີ່ວິທະຍຸການບິນ;

2) 10.000.000 ກີບ ສໍາລັບການນໍາໃຊ້ ບາລູນ, ປູມເປົ້າ, ວ່າວ, ເຮືອບິນບໍ່ມີຄົນຂັບ, ຈູດບັ້ງໄຟ ຫຼື ວັດຖຸອື່ນ ທີ່ບິນໄດ້ ໃນ ສະໜາມບິນ, ເດີ່ນບິນ ຫຼື ເຂດອ້ອມຮອບສະໜາມບິນ ແລະ ຕາມເສັ້ນທາງບິນ ໂດຍບໍ່ໄດ້ຮັບອະນຸຍາດຈາກ ກົມການບິນພົນລະເຮືອນ ທີ່ເປັນອຸປະສັກແກ່ຄວາມປອດໄພການບິນ;

3) 20.000.000 ກີບ ສໍາລັບການສ້າງຄວາມເສຍຫາຍໃຫ້ແກ່ ວັດຖຸປະກອບ, ສິ່ງອໍານວຍຄວາມສະດວກ ແລະ ລະບົບເຕັກນິກທາງດ້ານຈະລາຈອນທາງອາກາດ;

4) 25.000.000 ກີບ ສໍາລັບການແຈ້ງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມຈິງ ໃນການຂໍອະນຸຍາດປະຕິບັດການບິນ.

## ໝວດທີ 11
## ການປັບໃໝຕໍ່ຜູ້ລະເມີດລະບຽບການກ່ຽວກັບການຂົນສົ່ງທາງອາກາດ

### ມາດຕາ 32 ການລະເມີດລະບຽບການກ່ຽວກັບການຂົນສົ່ງທາງອາກາດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດລະບຽບການຂົນສົ່ງທາງອາກາດ ຈະຖືກປັບໃໝ ດັ່ງນີ້:

1) 3.000.000 ກີບ ສໍາລັບການເກັບຄ່າບໍລິການລໍ້ຍູ້ ຄົນພິການ ແລະ ຜູ້ອາຍຸສູງ ຢູ່ຕຶກອາຄານຜູ້ໂດຍສານ;

2) 3.000.000 ກີບ ສໍາລັບການບໍ່ຕິດຕາມເບິ່ງແຍງຜູ້ໂດຍສານຂຶ້ນເຮືອບິນ;

3) 5.000.000 ກີບ ສໍາລັບການບໍ່ລາຍງານຂໍ້ມູນກ່ຽວກັບການຂົນສົ່ງທາງອາກາດ ໃຫ້ກົມການບິນພົນລະເຮືອນ;

4) 5.000.000 ກີບ ສໍາລັບການບໍ່ ຫຸ້ມຫໍ່, ຕິດສະຫຼາກ ແລະ ເຄື່ອງໝາຍສິນຄ້າອັນຕະລາຍໃນເວລາຂົນສົ່ງທາງອາກາດ ຕາມລະບຽບການ;

5) 10.000.000 ກີບ ສໍາລັບການປະຕິບັດລະຫັດຖ້ຽວບິນຮ່ວມກັນ ໃນການໃຫ້ບໍລິການເສັ້ນທາງບິນລະຫວ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດຈາກ ກົມການບິນພົນລະເຮືອນ;

6) 10.000.000 ກີບ ສໍາລັບການບໍ່ຂົນສົ່ງຜູ້ໂດຍສານທີ່ເປັນຄົນພິການ;

7) 15.000.000 ກີບ ສໍາລັບການສ້າງຕັ້ງສໍານັກງານຜູ້ຕາງໜ້າສາຍການບິນຕ່າງປະເທດ, ເປີດຫ້ອງຂາຍປີ້ ຫຼື ເປັນຕົວແທນຂາຍປີ້ຢູ່ ສປປ ລາວ ໂດຍບໍ່ໄດ້ຮັບອະນຸຍາດຈາກ ກົມການບິນພົນລະເຮືອນ;

8) 15.000.000 ກີບ ສໍາລັບການ ສະໜອງຂໍ້ມູນທີ່ບໍ່ມີມູນຄວາມຈິງ, ບໍ່ແຈ້ງເຫດການກ່ຽວກັບໄພຂົ່ມຂູ່ ຫຼື ອຸບປະຕິເຫດຂອງເຮືອບິນ;

9) 20.000.000 ກີບ ສໍາລັບການບໍ່ລາຍງານ ຫຼື ລາຍງານ ບໍ່ຖືກຕ້ອງຕາມຄວາມຈິງກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ;

10) 20.000.000 ກີບ ສໍາລັບການປ່ຽນຈຸດປະສົງ, ຖ້ຽວບິນ, ເສັ້ນທາງບິນ ໂດຍບໍ່ໄດ້ຮັບອະນຸຍາດຈາກກົມການບິນພົນລະເຮືອນ;

11) 20.000.000 ກີບ ສໍາລັບການບໍ່ປະຕິບັດຕາມລະບຽບການເກັບຄ່າຂົນສົ່ງທາງອາກາດ ທີ່ໄດ້ຮັບຮອງຈາກກົມການບິນພົນລະເຮືອນ;

12) 25.000.000 ກີບ ສໍາລັບການຂົນສົ່ງແບບເຊົ່າເໝົາລໍາເຮືອບິນ ໂດຍບໍ່ໄດ້ຮັບອະນຸຍາດຈາກກົມການບິນພົນລະເຮືອນ;

13) 25.000.000 ກີບ ສໍາລັບການໃຫ້ການບໍລິການຂົນສົ່ງທາງອາກາດ ໂດຍບໍ່ໄດ້ຮັບອະນຸຍາດສິດທິການບິນ;

14) 25.000.000 ກີບ ສໍາລັບການຈັດກິດຈະກໍາ ຢູ່ເທິງເຮືອບິນທີ່ອາດຈະເປັນໄພຂົ່ມຂູ່ຕໍ່ຄວາມປອດໄພ ແລະ ການປ້ອງກັນຄວາມປອດໄພການບິນ;

15) 25.000.000 ກີບ ສໍາລັບການບໍ່ປະຕິບັດ ຕາມໃບອະນຸຍາດເປັນຕົວແທນຂາຍປີ້-ຈອງບ່ອນຜູ້ໂດຍສານທາງອາກາດ;

16) 30.000.000 ກີບ ສໍາລັບການບໍ່ຊື້ປະກັນໄພ ຜູ້ໂດຍສານ, ເຄື່ອງຂອງ, ສິນຄ້າ ແລະ ເຄື່ອງຝາກທາງໄປສະນີ ຕາມຄວາມຮັບຜິດຊອບຂອງຕົນ;

17) 30.000.000 ກີບ ສໍາລັບການຂົນສົ່ງ ຜູ້ໂດຍສານ, ສິນຄ້າ, ເຄື່ອງຂອງ ແລະ ເຄື່ອງຝາກທາງໄປສະນີ ໂດຍບໍ່ມີໃບອະນຸຍາດດໍາເນີນທຸລະກິດຂົນສົ່ງທາງອາກາດ ຫຼື ໃບອະນຸຍາດໝົດອາຍຸ;

18) 30.000.000 ກີບ ສໍາລັບການຂົນສົ່ງ ອາວຸດ ແລະ ທາດລະເບີດ ລວມທັງຊິ້ນສ່ວນຂອງອາວຸດເສິກ, ສິ່ງເສບຕິດ ຫຼື ກໍາມັນຕະພາບລັງສີ ໂດຍບໍ່ໄດ້ຮັບຮູ້ຈາກກົມການບິນພົນລະເຮືອນ;

19) 50.000.000 ກີບ ສໍາລັບການບັນທຸກນໍ້າໜັກເກີນກໍານົດ.

**ມາດຕາ 33 ການລະເມີດລະບຽບການກ່ຽວກັບຜູ້ຂົນສົ່ງທາງອາກາດ**

ຜູ້ຂົນສົ່ງທາງອາກາດ ທີ່ລະເມີດລະບຽບການຂົນສົ່ງທາງອາກາດ ຈະຖືກປັບໃໝ ດັ່ງນີ້:

1) 5.000.000 ກີບ ສໍາລັບການດໍາເນີນທຸລະກິດຂົນສົ່ງທາງອາກາດ ບໍ່ຖືກຕ້ອງຕາມປະເພດທີ່ໄດ້ຮັບອະນຸຍາດ, ບໍ່ມີໃບອະນຸຍາດ, ໃບອະນຸຍາດໝົດອາຍຸ;

2) 5.000.000 ກີບ ສໍາລັບການແກ່ຍາວເວລາໃນການສົ່ງມອບສິນຄ້າໃຫ້ຜູ້ຮັບ ຫຼື ສົ່ງມອບສິນຄ້າໃຫ້ບຸກຄົນທີ່ບໍ່ມີສິດຮັບ;

3) 5.000.000 ກີບ ສໍາລັບການບໍ່ສະໜອງຍານພາຫະນະ ທີ່ເໝາະສົມສໍາລັບຊ່ວຍຜູ້ໂດຍສານ ທີ່ຕ້ອງການຄວາມຊ່ວຍເຫຼືອໃນອາຄານຜູ້ໂດຍສານ ຂອງສະໜາມບິນ, ເດີ່ນບິນ;

4) 9.000.000 ກີບ ສໍາລັບການນໍາເຮືອບິນ ບິນອອກນອກເສັ້ນທາງບິນ, ຂຶ້ນ-ລົງ ແລະ ບິນຜ່ານ ໂດຍບໍ່ໄດ້ຮັບອະນຸຍາດຈາກນັກບັນຊາການຈະລາຈອນທາງອາກາດ;

5) 15.000.000 ກີບ ສໍາລັບການນໍາໃຊ້ເຮືອບິນ ບິນເຂົ້າໃນເຂດ ເກືອດຫ້າມ, ອັນຕະລາຍ ຫຼື ຈໍາກັດການບິນ;

6) 15.000.000 ກີບ ສໍາລັບການສັບປ່ຽນສິນຄ້າ ຫຼື ປົກປິດຊຸກເຊື່ອງສິນຄ້າເກືອດຫ້າມ;

7) 15.000.000 ກີບ ສໍາລັບການບໍ່ບໍາລຸງຮັກສາອຸປະກອນກ່ຽວກັບລະບົບການ ຄຸ້ມຄອງ, ຕິດຕາມກວດກາ ແລະ ຄວບຄຸມ ການນໍາໃຊ້ເຮືອບິນໃຫ້ມີຄວາມປອດໄພ;

8) 25.000.000 ກີບ ສໍາລັບການນໍາໃຊ້ ເຮືອບິນ, ເຄື່ອງຈັກ, ໃບພັດ, ຊິ້ນສ່ວນປະກອບ ແລະ ອຸປະກອນຂອງເຮືອບິນ ໂດຍບໍ່ໄດ້ຮັບອະນຸຍາດຈາກກົມການບິນພົນລະເຮືອນ;

9) 25.000.000 ກີບ ສໍາລັບການເຄື່ອນຍ້າຍ ຊິ້ນສ່ວນຂອງເຮືອບິນ, ອຸປະກອນ ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ທໍາລາຍຂໍ້ມູນທີ່ເປັນຫຼັກຖານອື່ນ ກ່ຽວກັບ ເຫດຕິດຂັດ, ອຸບປະຕິເຫດ ຂອງເຮືອບິນ;

10) 25.000.000 ກີບ ສໍາລັບການບໍ່ຮັບປະກັນການບໍລິການພາກພື້ນດິນ ແລະ ສິ່ງອໍານວຍຄວາມສະດວກ ເພື່ອເຮັດໃຫ້ການປະຕິບັດການບິນມີຄວາມປອດໄພ;

11) 25.000.000 ກີບ ສໍາລັບການບໍ່ປະຕິບັດຕາມເງື່ອນໄຂທີ່ໄດ້ກໍານົດໄວ້ໃນໃບຢັ້ງຢືນຜູ້ຂົນສົ່ງທາງອາກາດ;

12) 45.000.000 ກີບ ສໍາລັບການຂົນສົ່ງວັດຖຸອັນຕະລາຍ ໂດຍບໍ່ໄດ້ຮັບອະນຸຍາດຈາກກົມການບິນພົນລະເຮືອນ ແລະ ພາກສ່ວນທີ່ກ່ຽວຂ້ອງ.

## ໝວດທີ 12
## ການປັບໃໝຕໍ່ຜູ້ລະເມີດລະບຽບການກ່ຽວກັບການປ້ອງກັນຄວາມປອດໄພການບິນ

**ມາດຕາ 34 ການລະເມີດລະບຽບການກ່ຽວກັບການນໍາໃຊ້ ບັດເຂົ້າ-ອອກເຂດຫວງຫ້າມ ໃນ ສະໜາມບິນ, ເດີ່ນບິນ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດລະບຽບການກ່ຽວກັບການນໍາໃຊ້ ບັດເຂົ້າ-ອອກເຂດຫວງຫ້າມ ໃນສະໜາມບິນ, ເດີ່ນບິນ ຈະຖືກປັບໃໝ ດັ່ງນີ້:

1) 300.000 ກີບ ສໍາລັບການບໍ່ ຕິດ ຫຼື ຫ້ອຍ ບັດ ຕາມຕໍາແໜ່ງ ທີ່ໄດ້ກໍານົດໄວ້;

2) 500.000 ກີບ ສຳລັບການນຳໃຊ້ ບັດເຂົ້າ-ອອກເຂດຫວງຫ້າມ ບໍ່ຖືກຕ້ອງຕາມເຂດອະນຸຍາດ;

3) 800.000 ກີບ ສຳລັບການໃຫ້ບຸກຄົນອື່ນຢືມ ຫຼື ນຳໃຊ້ບັດຂອງຕົນ ເພື່ອເຂົ້າເຂດຫວງຫ້າມ ໃນສະໜາມບິນ, ເດີ່ນບິນ;

4) 1.000.000 ກີບ ສຳລັບການ ປ່ອຍ ຫຼື ເມີນເສີຍ ໃຫ້ບຸກຄົນ, ຍານພາຫະນະ ທີ່ບໍ່ໄດ້ຮັບອະນຸຍາດ ເຂົ້າເຂດຫວງຫ້າມ ໃນສະໜາມບິນ, ເດີ່ນບິນ.

**ມາດຕາ 35 ການລະເມີດລະບຽບການກ່ຽວກັບການປ້ອງກັນຄວາມປອດໄພ ໃນ ສະໜາມບິນ, ເດີ່ນບິນ, ເຮືອບິນ ແລະ ພື້ນທີ່ຕິດຕັ້ງສິ່ງອຳນວຍຄວາມສະດວກການບິນ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດລະບຽບການກ່ຽວກັບການປ້ອງກັນຄວາມປອດໄພ ໃນສະໜາມບິນ, ເດີ່ນບິນ, ເຮືອບິນ ແລະ ພື້ນທີ່ຕິດຕັ້ງສິ່ງອຳນວຍຄວາມສະດວກການບິນ ຈະຖືກປັບໃໝ ດັ່ງນີ້:

1) 500.000 ກີບ ສຳລັບການບໍ່ປະຕິບັດຕາມ ຄຳແນະນຳ ຂອງພະນັກງານປ້ອງກັນຄວາມປອດໄພສະໜາມບິນ ແລະ ເຈົ້າໜ້າທີ່ຕຳຫຼວດສະໜາມບິນ;

2) 1.000.000 ກີບ ສຳລັບການນຳເອົາ ທາດເຫຼົ້າ, ທາດແຫຼວ ທີ່ມີສ່ວນປະສົມຂອງທາດເຫຼົ້າ ແລະ ທາດແຫຼວປະເພດອື່ນ ເກີນລະບຽບການກຳນົດ ເຂົ້າໄປໃນເຂດຫວງຫ້າມ ຫຼື ເຮືອບິນ;

3) 1.000.000 ກີບ ສຳລັບການເຂົ້າເຂດຫວງຫ້າມ ໃນ ສະໜາມບິນ, ເດີ່ນບິນ, ເຮືອບິນ ແລະ ພື້ນທີ່ຕິດຕັ້ງສິ່ງອຳນວຍຄວາມສະດວກການບິນ ໂດຍບໍ່ຜ່ານຈຸດກວດກາປ້ອງກັນຄວາມປອດໄພ;

4) 2.000.000 ກີບ ສຳລັບການ ປ່ອຍ ຫຼື ເມີນເສີຍໃຫ້ ບຸກຄົນ, ເຄື່ອງຂອງ, ສິນຄ້າ, ເຄື່ອງຝາກທາງໄປສະນີ ແລະ ວັດຖຸສິ່ງຂອງອື່ນ ເຂົ້າໃນ ສະໜາມບິນ, ເດີ່ນບິນ ຫຼື ເຮືອບິນ ໂດຍບໍ່ໄດ້ຜ່ານການກວດກາປ້ອງກັນຄວາມປອດໄພ;

5) 5.000.000 ກີບ ສຳລັບການປ່ອຍໃຫ້ ບຸກຄົນອື່ນ ແລະ ນຳວັດຖຸສິ່ງຂອງ ເຂົ້າໄປໃນຫ້ອງນັກບິນ ໂດຍບໍ່ຖືກຕ້ອງຕາມລະບຽບ;

6) 5.000.000 ກີບ ສຳລັບການບໍ່ປະຕິບັດຕາມລະບຽບການ ມອບ-ຮັບ ອາວຸດ ທີ່ອະນຸຍາດ ໃຫ້ນຳເຂົ້າເຂດຫວງຫ້າມ ໃນສະໜາມບິນ, ເດີ່ນບິນ ຫຼື ຢູ່ເທິງເຮືອບິນ;

7) 5.000.000 ກີບ ສຳລັບການສະໜອງຂໍ້ມູນກ່ຽວກັບຜູ້ໂດຍສານລ່ວງໜ້າ ໃຫ້ເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກເມືອງ ບໍ່ຄົບຖ້ວນຕາມລະບຽບການຂອງກົມການບິນພົນລະເຮືອນ;

8) 5.000.000 ກີບ ສຳລັບການແຈ້ງຂໍ້ມູນທີ່ບໍ່ຖືກຕ້ອງ ຊຶ່ງອາດຈະເປັນໄພອັນຕະລາຍຕໍ່ຄວາມປອດໄພ ຂອງເຮືອບິນ, ຜູ້ໂດຍສານ, ຈຸບິນ, ນັກວິຊາການເຕັກນິກການບິນ ຫຼື ບຸກຄົນອື່ນ ໃນ ສະໜາມບິນ, ເດີ່ນບິນ ແລະ ພື້ນທີ່ອຳນວຍຄວາມສະດວກດ້ານການບິນ;

9) 6.000.000 ກີບ ສຳລັບການບໍ່ ຄຸ້ມຄອງ, ນຳໃຊ້, ທົດສອບ ແລະ ບຳລຸງຮັກສາ ວັດຖຸປະກອບ ແລະ ສິ່ງອຳນວຍຄວາມສະດວກ ໃນ ສະໜາມບິນ, ເດີ່ນບິນ ແລະ ພື້ນທີ່ຕິດຕັ້ງສິ່ງອຳນວຍຄວາມສະດວກດ້ານການບິນ;

10) 10.000.000 ກີບ ສຳລັບການແຈ້ງຂໍ້ມູນທີ່ບໍ່ມີມູນຄວາມຈິງ ຫຼື ຂໍ້ມູນເທັດ ກ່ຽວກັບ ອາວຸດ, ວັດຖຸລະເບີດ, ອາວຸດ ເຄມີ ແລະ ຊີວະພາບ ທີ່ເປັນໄພຂົ່ມຂູ່ຕໍ່ຄວາມປອດໄພຂອງເຮືອບິນ ໃນເວລາປະຕິບັດຖ້ຽວບິນ ຫຼື ຈອດຢູ່ເທິງໜ້າດິນ;

11) 10.000.000 ກີບ ສຳລັບການນຳເອົາ ສານ ຫຼື ວັດຖຸອັນຕະລາຍ ເຂົ້າໄປໃນເຂດຫວງຫ້າມ ໃນສະໜາມບິນ, ເດີ່ນບິນ ໂດຍບໍ່ໄດ້ຮັບອະນຸຍາດ;

12) 10.000.000 ກີບ ສຳລັບການປະປ່ອຍໃຫ້ບຸກຄົນອື່ນໃຊ້ສຳນັກງານ ຫຼື ຍານພາຫານະ ໃນສະໜາມບິນ, ເດີ່ນບິນ ຫຼື ເທິງເຮືອບິນ;

13) 10.000.000 ກີບ ສຳລັບການນຳເອົາ ອາວຸດ, ວັດຖຸລະເບີດ ແລະ ສິ່ງຂອງອັນຕະລາຍ ເຂົ້າໃນເຂດຫວງຫ້າມ ໃນ ສະໜາມບິນ, ເດີ່ນບິນ ຫຼື ເຮືອບິນ ໂດຍບໍ່ໄດ້ຮັບອະນຸຍາດ;

14) 10.000.000 ກີບ ສໍາລັບການບໍ່ກວດກາການປ້ອງກັນຄວາມປອດໄພການບິນ ກ່ອນການປະຕິບັດຖ້ຽວບິນ;

15) 10.000.000 ກີບ ສໍາລັບການເຂົ້າໄປໃນເຮືອບິນ ໂດຍບໍ່ໄດ້ຮັບອະນຸຍາດ.

**ມາດຕາ 36 ການລະເມີດລະບຽບການກ່ຽວກັບການປະຕິບັດງານໃນເຂດຄວບຄຸມການປ້ອງກັນຄວາມປອດໄພການບິນ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດລະບຽບການກ່ຽວກັບການປະຕິບັດງານໃນເຂດຄວບຄຸມການປ້ອງກັນຄວາມປອດໄພການບິນ ຈະຖືກປັບໃໝ ດັ່ງນີ້:

1) 2.000.000 ກີບ ສໍາລັບການບໍ່ເກັບຮັກສາ ຮູບພາບ ທີ່ຜ່ານເຄື່ອງສາຍລັງສີ ແລະ ກ້ອງວົງຈອນປິດ;

2) 3.000.000 ກີບ ສໍາລັບການບໍ່ ບັນທຶກ ແລະ ເກັບຮັກສາ ເອກະສານ, ປະຫວັດ, ບຶດບັນທຶກປະຈໍາວັນ, ປຶ້ມບັນທຶກ ການກວດກາ, ການບໍາລຸງຮັກສາ ແລະ ສ້ອມແປງວັດຖຸປະກອນ ປ້ອງກັນຄວາມປອດໄພການບິນ;

3) 3.000.000 ກີບ ສໍາລັບການບໍ່ ບັນທຶກ ແລະ ເກັບຮັກສາ ເອກະສານ ແລະ ປຶ້ມບັນທຶກກວດກາວັດຖຸສິ່ງຂອງ ເຂົ້າ-ອອກ ເຂດຫວງຫ້າມ ໃນ ສະໜາມບິນ, ເດີ່ນບິນ;

4) 5.000.000 ກີບ ສໍາລັບການບໍ່ກວດກາ ຜູ້ໂດຍສານ, ເຄື່ອງຂອງຜູ້ໂດຍສານ, ບຸກຄົນທີ່ເຮັດວຽກເຂົ້າ-ອອກ ເຂດຫວງຫ້າມ ແບບສຸ່ມກວດ ຕາມລະບຽບການ ໃນ ສະໜາມບິນ, ເດີ່ນບິນ;

5) 5.000.000 ກີບ ສໍາລັບການບໍ່ລາຍງານ ຫຼື ປົກປິດ ການກະທໍາທີ່ລະເມີດກົດໝາຍ ແລະລະບຽບການ ກ່ຽວກັບການປ້ອງກັນຄວາມປອດໄພການບິນ;

6) 5.000.000 ກີບ ສໍາລັບການສັບປ່ຽນນັກວິຊາການ ປະຈໍາຢູ່ເຄື່ອງສາຍລັງສີ ເກີນເວລາທີ່ໄດ້ກໍານົດໄວ້;

7) 6.000.000 ກີບ ສໍາລັບການນໍາສົ່ງຜູ້ຖືກຫາ, ນັກໂທດ, ຜູ້ຖືກເນລະເທດ, ຜູ້ຮ້າຍຂ້າມແດນ, ຜູ້ຖືກຈັບຕົວ ເກີນເວລາຕາມກົດໝາຍ;

8) 8.000.000 ກີບ ສໍາລັບການບໍ່ເກັບຮັກສາ ກະເປົາ, ເຄື່ອງຂອງ ທີ່ ຫຼົງລືມ, ບໍ່ມີຜູ້ມາຮັບ ແລະບໍ່ມີເອກະສານຕິດຕາມສິ່ງຂອງ;

9) 10.000.000 ກີບ ສໍາລັບການບໍ່ຝຶກຊ້ອມການປ້ອງກັນຄວາມປອດໄພ ຂັ້ນພື້ນຖານ ແລະ ເຕັມຮູບແບບ ເພື່ອຮັບມືກັບການກະທໍາທີ່ຜິດກົດໝາຍ;

10) 10.000.000 ກີບ ສໍາລັບການນໍາໃຊ້ ວັດຖຸປະກອນ, ສິ່ງອໍານວຍຄວາມສະດວກ ແລະຍານພາຫະນະ ປ້ອງກັນຄວາມປອດໄພການບິນ ທີ່ບໍ່ໄດ້ຕາມກໍານົດໝາຍເຕັກນິກ ແລະ ມາດຕະຖານເຕັກນິກ;

11) 10.000.000 ກີບ ສໍາລັບການນໍາໃຊ້ເຄື່ອງໝາຍປ້ອງກັນຄວາມປອດໄພໃສ່ ຍານພາຫະນະ, ວັດຖຸປະກອນ, ສິນຄ້າ, ອາຫານ, ໄປສະນີພັນ ທີ່ບໍ່ຖືກຕ້ອງ;

12) 12.000.000 ກີບ ສໍາລັບການບໍ່ນໍາສົ່ງ ແຜນ ແລະ ປຶ້ມຄູ່ມື ການປ້ອງກັນຄວາມປອດໄພການບິນໃຫ້ກົມການບິນພົນລະເຮືອນຮັບຮອງ;

13) 15.000.000 ກີບ ສໍາລັບການບໍ່ທົດສອບເຄື່ອງສາຍລັງສີ, ຈຸດກວດກາປ້ອງກັນຄວາມປອດໄພການບິນ ແລະ ເຄື່ອງກວດຈັບໂລຫະດ້ວຍມື;

14) 20.000.000 ກີບ ສໍາລັບການບໍ່ປະຕິບັດຕາມກໍານົດໝາຍເຕັກນິກ, ມາດຕະຖານເຕັກນິກ ໃນການກໍ່ສ້າງ, ບໍາລຸງຮັກສາ ແລະ ສ້ອມແປງ ເຄື່ອງມື ແລະ ວັດຖຸປະກອນ ກ່ຽວກັບການປ້ອງກັນຄວາມປອດໄພການບິນ.

**ມາດຕາ 37 ການລະເມີດລະບຽບການກ່ຽວກັບ ການສະກັດກັ້ນ, ຕ້ານອັກຄີໄພ ແລະ ກູ້ໄພ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດລະບຽບການກ່ຽວກັບການ ສະກັດກັ້ນ, ຕ້ານອັກຄີໄພ ແລະ ກູ້ໄພ ໃນ ສະໜາມບິນ, ເດີ່ນບິນ ແລະ ພື້ນທີ່ຕິດຕັ້ງສິ່ງອໍານວຍຄວາມສະດວກການບິນ ຈະຖືກປັບໃໝ ດັ່ງນີ້:

1) 3.000.000 ກີບ ສໍາລັບການຕິດຕັ້ງ ປ້າຍ ຫຼື ສິ່ງອື່ນ ທີ່ຂັດກັບລະບຽບການ ກ່ຽວກັບການສະກັດກັ້ນ, ຕ້ານອັກຄີໄພ ແລະ ກູ້ໄພ ໃນ ສະໜາມບິນ, ເດີ່ນບິນ ແລະ ພື້ນທີ່ຕິດຕັ້ງສິ່ງອໍານວຍຄວາມສະດວກການບິນ;

2) 3.000.000 ກີບ ສໍາລັບການບໍ່ເຜີຍແຜ່ລະບຽບການກ່ຽວກັບ ການສະກັດກັ້ນ, ຕ້ານອັກຄີໄພ ແລະ ກູ້ໄພ ໃຫ້ນັກວິຊາການສະໜາມບິນ;

3) 3.000.000 ກີບ ສໍາລັບການບໍ່ກວດກາລະບົບມອດໄຟ ແລະ ບໍາລຸງຮັກສາຍານພາຫະນະ ປ້ອງກັນອັກຄີໄພ ໃນ ສະໜາມບິນ, ເດີ່ນບິນ ແລະ ພື້ນທີ່ຕິດຕັ້ງສິ່ງອໍານວຍຄວາມສະດວກການບິນ;

4) 3.000.000 ກີບ ສໍາລັບການເກັບມ້ຽນສິ່ງຂອງທີ່ເປັນອັນຕະລາຍ, ວັດຖຸໄວໄຟ ໃນ ສະໜາມບິນ, ເດີ່ນບິນ ແລະ ພື້ນທີ່ຕິດຕັ້ງສິ່ງອໍານວຍຄວາມສະດວກການບິນ ໂດຍບໍ່ໄດ້ຮັບອະນຸຍາດ;

5) 3.000.000 ກີບ ສໍາລັບການຕິດຕັ້ງ ວັດຖຸປະກອນ ແລະ ສິ່ງອໍານວຍຄວາມສະດວກສະກັດກັ້ນ ແລະ ຕ້ານອັກຄີໄພ ທີ່ໝົດອາຍຸ ຫຼື ບໍ່ຖືກຕາມມາດຕະຖານເຕັກນິກ ໃນອາຄານຜູ້ໂດຍສານ, ເຂດຫວງຫ້າມ ຫຼື ຍານພາຫະນະທີ່ປະຕິບັດງານ ໃນ ສະໜາມບິນ, ເດີ່ນບິນ ແລະ ພື້ນທີ່ຕິດຕັ້ງສິ່ງອໍານວຍຄວາມສະດວກການບິນ;

6) 3.000.000 ກີບ ສໍາລັບການບໍ່ກວດກາວິທີການສະກັດກັ້ນ ແລະ ຕ້ານອັກຄີໄພ ໃນສະໜາມບິນ, ເດີ່ນບິນ ແລະ ພື້ນທີ່ຕິດຕັ້ງສິ່ງອໍານວຍຄວາມສະດວກການບິນ;

7) 4.000.000 ກີບ ສໍາລັບການບໍ່ຈັດຝຶກອົບຮົມ ແລະ ຝຶກຊ້ອມການ ສະກັດກັ້ນ, ຕ້ານອັກຄີໄພ ແລະ ກູ້ໄພ;

8) 5.000.000 ກີບ ສໍາລັບການ ທໍາລາຍ ປ້າຍ, ເຄື່ອງໝາຍ, ວັດຖຸປະກອນ ກ່ຽວກັບການສະກັດກັ້ນ, ຕ້ານອັກຄີໄພ ແລະ ກູ້ໄພ ໃນ ສະໜາມບິນ, ເດີ່ນບິນ ແລະ ພື້ນທີ່ຕິດຕັ້ງສິ່ງອໍານວຍຄວາມສະດວກການບິນ;

9) 5.000.000 ກີບ ສໍາລັບການ ຈູດ ວັດຖຸສິ່ງຂອງ ໃນ ສະໜາມບິນ, ເດີ່ນບິນ ແລະ ພື້ນທີ່ຕິດຕັ້ງສິ່ງອໍານວຍຄວາມສະດວກການບິນ ໂດຍບໍ່ໄດ້ຮັບອະນຸຍາດ;

10) 5.000.000 ກີບ ສໍາລັບການ ສູບຢາ, ສູບຢາເອເລັກໂຕຣນິກ, ນໍາໃຊ້ ກັບໄຟ, ສິ່ງຂອງທີ່ສາມາດກໍາເນີດໄຟ ແລະ ທາດໄໝ້ລະເບີດງ່າຍ ຢູ່ເຂດທີ່ມີຄວາມສ່ຽງເກີດອັກຄີໄພ ເປັນຕົ້ນ ເຂດປອດໄພຂອງເຮືອບິນ, ສາງນໍ້າມັນເຊື້ອໄຟ, ສະຖານນີຕື່ມນໍ້າມັນ ໃນ ສະໜາມບິນ, ເດີ່ນບິນ ແລະ ພື້ນທີ່ຕິດຕັ້ງສິ່ງອໍານວຍຄວາມສະດວກການບິນ;

11) 5.000.000 ສໍາລັບການບໍ່ສ້າງລະບຽບການ ແລະ ແຜນ ສະກັດກັ້ນ ແລະ ຕ້ານອັກຄີໄພ ໃນ ສະໜາມບິນ, ເດີ່ນບິນ ແລະ ພື້ນທີ່ຕິດຕັ້ງສິ່ງອໍານວຍຄວາມສະດວກການບິນ.

## ໝວດທີ 13
## ການປັບໃໝຕໍ່ຜູ້ລະເມີດລະບຽບການກ່ຽວກັບລະບົບຄຸ້ມຄອງຄວາມປອດໄພການບິນ, ເຫດຕິດຂັດ ແລະ ອຸບປະຕິເຫດການບິນ

### ມາດຕາ 38 ການລະເມີດລະບຽບການກ່ຽວກັບລະບົບຄຸ້ມຄອງຄວາມປອດໄພການບິນ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດລະບຽບການກ່ຽວກັບລະບົບຄຸ້ມຄອງຄວາມປອດໄພການບິນ ຈະຖືກປັບໃໝ ດັ່ງນີ້:

1) 10.000.000 ກີບ ສໍາລັບການບໍ່ຕິດຕາມ ກວດກາ, ປະເມີນລະດັບຄວາມປອດໄພການບິນ ຫຼື ບໍ່ລາຍງານຜົນການປະເມີນລະດັບຄວາມປອດໄພການບິນ;

2) 10.000.000 ກີບ ສໍາລັບການບໍ່ສ້າງລະບົບຄຸ້ມຄອງຄວາມປອດໄພການບິນ;

3) 10.000.000 ກີບ ສໍາລັບການບໍ່ ບໍາລຸງຮັກສາ, ສ້ອມແປງ ລະບົບຄຸ້ມຄອງຄວາມປອດໄພການບິນ ຕາມປຶ້ມຄູ່ມືທີ່ໄດ້ຮັບຮອງຈາກກົມການບິນພົນລະເຮືອນ;

4) 10.000.000 ກີບ ສໍາລັບການບໍ່ວິເຄາະຂໍ້ມູນຖ້ຽວບິນ, ແຜນປະເມີນການຈັດຕັ້ງປະຕິບັດຄວາມປອດໄພຂອງຖ້ຽວບິນ, ຈຸຫ້ອງໂດຍສານ;

5) 15.000.000 ກີບ ສໍາລັບການບໍ່ຈັດຝຶກອົບຮົມກ່ຽວກັບລະບົບຄຸ້ມຄອງຄວາມປອດໄພການບິນ.

**ມາດຕາ 39 ການລະເມີດລະບຽບການກ່ຽວກັບ ເຫດຕິດຂັດ ແລະ ອຸບປະຕິເຫດການບິນ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດລະບຽບການກ່ຽວກັບ ເຫດຕິດຂັດ ແລະ ອຸບປະຕິເຫດການບິນ ຈະຖືກປັບໃໝ ດັ່ງນີ້:

1) 3.000.000 ກີບ ສໍາລັບການບໍ່ແຈ້ງຫຼັກຖານ ແລະ ຂໍ້ມູນ ກ່ຽວກັບ ເຫດຕິດຂັດ ແລະ ອຸບປະຕິເຫດການບິນ ຕາມການຮຽກຮ້ອງຂອງຫ້ອງການ ສືບສວນ-ສອບສວນ ອຸບປະຕິເຫດການບິນ;

2) 3.000.000 ກີບ ສໍາລັບການບໍ່ປົກປັກຮັກສາ ແລະ ປ້ອງກັນ ເຮືອບິນ, ຊາກເຮືອບິນ, ຊິ້ນສ່ວນ ຫຼື ສ່ວນປະກອບ, ວັດຖຸປະກອບ ແລະ ເຄື່ອງຂອງ ໃນເຮືອບິນ ທີ່ປະສົບ ເຫດຕິດຂັດ ຫຼື ອຸບປະຕິເຫດ;

3) 5.000.000 ກີບ ສໍາລັບການບໍ່ລາຍງານ ເຫດຕິດຂັດ ຫຼື ອຸບປະຕິເຫດການບິນ;

4) 10.000.000 ກີບ ສໍາລັບການບໍ່ ປະເມີນຄວາມສ່ຽງ, ນໍາໃຊ້ມາດຕະການຫຼຸດຜ່ອນ ຄວາມສ່ຽງຕໍ່ເຫດຕິດຂັດ ແລະ ອຸບປະຕິເຫດການບິນ.

## ໝວດທີ 14
## ມາດຕະການອື່ນຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບການບິນພົນລະເຮືອນ

**ມາດຕາ 40 ມາດຕະການຕໍ່ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການບິນພົນລະເຮືອນ ຊຶ່ງມີລັກສະນະເບົາ ບໍ່ເປັນການກະທໍາຜິດທາງອາຍາ ແລະ ບໍ່ສ້າງຄວາມເສຍຫາຍ ຕໍ່ ຄວາມປອດໄພ ແລະ ການປ້ອງກັນຄວາມປອດໄພການບິນ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ.

ໃນກໍລະນີ ຫາກມີການລະເມີດຊໍ້າ ທີ່ພາໃຫ້ເກີດຄວາມສ່ຽງ, ເປັນໄພຂົ່ມຂູ່, ສ້າງຄວາມເສຍຫາຍ ແລະ ເປັນອັນຕະລາຍ ຕໍ່ ຄວາມປອດໄພ ແລະ ການປ້ອງກັນຄວາມປອດໄພການບິນ ຈະຖືກປັບໃໝໃນອັດຕາ ຕາມກໍລະນີທີ່ໄດ້ລະເມີດ ຕາມທີ່ໄດ້ກໍານົດໄວ້ໃນ ດໍາລັດສະບັບນີ້ ພ້ອມທັງໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 41 ມາດຕະການຕໍ່ຜູ້ຂົນສົ່ງທາງອາກາດ**

ຜູ້ຂົນສົ່ງທາງອາກາດ ທີ່ໄດ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການບິນພົນລະເຮືອນ ຊຶ່ງມີລັກສະນະເບົາ ບໍ່ເປັນການກະທໍາຜິດທາງອາຍາ ແລະ ບໍ່ສ້າງຄວາມເສຍຫາຍ ຕໍ່ ຄວາມປອດໄພ ແລະ ການປ້ອງກັນຄວາມປອດໄພການບິນ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ.

ໃນກໍລະນີ ຫາກມີການລະເມີດຊໍ້າ ທີ່ພາໃຫ້ເກີດຄວາມສ່ຽງ, ເປັນໄພຂົ່ມຂູ່, ສ້າງຄວາມເສຍຫາຍ ແລະ ເປັນອັນຕະລາຍ ຕໍ່ ຄວາມປອດໄພ ແລະ ການປ້ອງກັນຄວາມປອດໄພການບິນ ຈະຖືກປັບໃໝໃນອັດຕາ ຕາມກໍລະນີທີ່ໄດ້ລະເມີດ ຕາມທີ່ໄດ້ກໍານົດໄວ້ໃນດໍາລັດສະບັບນີ້, ນອກຈາກນີ້ຍັງຈະຖືກ ໂຈະ ຫຼື ຍົກເລີກ ຖ້ຽວບິນ, ໂຈະ ຫຼື ຖອນ ໃບຢັ້ງຢືນຜູ້ຂົນສົ່ງທາງອາກາດ, ໃບອະນຸຍາດດໍາເນີນທຸລະກິດການຂົນສົ່ງທາງອາກາດ ພ້ອມທັງໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 42 ມາດຕະການຕໍ່ ຈຸບິນ ແລະ ນັກວິຊາການເຕັກນິກການບິນ**

ຈຸບິນ ແລະ ນັກວິຊາການເຕັກນິກການບິນ ທີ່ໄດ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການບິນພົນລະເຮືອນ ຊຶ່ງມີລັກສະນະເບົາ ບໍ່ເປັນການກະທຳຜິດທາງອາຍາ ແລະ ບໍ່ສ້າງຄວາມເສຍຫາຍ ຕໍ່ຄວາມປອດໄພ ແລະ ການປ້ອງກັນຄວາມປອດໄພການບິນ ຈະຖືກສຶກສາອົບຮົມ, ກ່າວເຕືອນ.

ໃນກໍລະນີ ຫາກມີການລະເມີດຊໍ້າ ທີ່ພາໃຫ້ເກີດຄວາມສ່ຽງ, ເປັນໄພຂົ່ມຂູ່, ສ້າງຄວາມເສຍຫາຍ ແລະ ເປັນອັນຕະລາຍ ຕໍ່ ຄວາມປອດໄພ ແລະ ການປ້ອງກັນຄວາມປອດໄພການບິນ ຈະຖືກປັບໃໝໃນອັດຕາຕາມກໍລະນີທີ່ໄດ້ລະເມີດ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້, ນອກຈາກນີ້ຍັງຈະຖືກ ໂຈະ ຫຼື ຖອນ ໃບອະນຸຍາດການປະຕິບັດໜ້າທີ່ ພ້ອມທັງໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 43 ມາດຕະການຕໍ່ ນັກວິຊາການຈະລາຈອນທາງອາກາດ ແລະ ວິທະຍຸການບິນ**

ນັກວິຊາການຈະລາຈອນທາງອາກາດ ແລະ ວິທະຍຸການບິນ ທີ່ໄດ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການບິນພົນລະເຮືອນ ຊຶ່ງມີລັກສະນະເບົາ ບໍ່ເປັນການກະທຳຜິດທາງອາຍາ ແລະ ບໍ່ສ້າງຄວາມເສຍຫາຍ ຕໍ່ ຄວາມປອດໄພ ແລະ ການປ້ອງກັນຄວາມປອດໄພການບິນ ຈະຖືກສຶກສາອົບຮົມ, ກ່າວເຕືອນ.

ໃນກໍລະນີ ຫາກມີການລະເມີດຊໍ້າ ທີ່ພາໃຫ້ເກີດຄວາມສ່ຽງ, ເປັນໄພຂົ່ມຂູ່, ສ້າງຄວາມເສຍຫາຍ ແລະ ເປັນອັນຕະລາຍ ຕໍ່ ຄວາມປອດໄພ ແລະ ການປ້ອງກັນຄວາມປອດໄພການບິນ ຈະຖືກປັບໃໝໃນອັດຕາຕາມກໍລະນີທີ່ໄດ້ລະເມີດ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້, ນອກຈາກນີ້ຍັງຈະຖືກພັກການປະຕິບັດໜ້າທີ່, ຖືກຍົກຍ້າຍປະຕິບັດໜ້າທີ່ອື່ນ ຊົ່ວຄາວ, ໂຈະ ຫຼື ຖອນ ໃບອະນຸຍາດການປະຕິບັດໜ້າທີ່ ພ້ອມທັງໃຊ້ແທນຄ່າເສຍທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 44 ມາດຕະການຕໍ່ນັກວິຊາການສະໜາມບິນ**

ນັກວິຊາການສະໜາມບິນ ທີ່ໄດ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການບິນພົນລະເຮືອນ ຊຶ່ງມີລັກສະນະເບົາ ບໍ່ເປັນການກະທຳຜິດທາງອາຍາ ແລະ ບໍ່ສ້າງຄວາມເສຍຫາຍ ຕໍ່ ຄວາມປອດໄພ ແລະ ການປ້ອງກັນຄວາມປອດໄພການບິນ ຈະຖືກສຶກສາອົບຮົມ, ກ່າວເຕືອນ.

ໃນກໍລະນີ ຫາກມີການລະເມີດຊໍ້າ ທີ່ພາໃຫ້ເກີດຄວາມສ່ຽງ, ເປັນໄພຂົ່ມຂູ່, ສ້າງຄວາມເສຍຫາຍ ແລະ ເປັນອັນຕະລາຍ ຕໍ່ ຄວາມປອດໄພ ແລະ ການປ້ອງກັນຄວາມປອດໄພການບິນ ຈະຖືກປັບໃໝໃນອັດຕາຕາມກໍລະນີທີ່ໄດ້ລະເມີດ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້, ນອກຈາກນີ້ຍັງຈະຖືກພັກການປະຕິບັດໜ້າທີ່, ຖືກຍົກຍ້າຍປະຕິບັດໜ້າທີ່ອື່ນ ຊົ່ວຄາວ, ໂຈະ ຫຼື ຖອນ ໃບອະນຸຍາດການປະຕິບັດໜ້າທີ່ ພ້ອມທັງໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 45 ມາດຕະການຕໍ່ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ**

ພະນັກງານລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ທີ່ໄດ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການບິນພົນລະເຮືອນ ຈະຖືກລົງວິໄນ ຕາມ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

## ໝວດທີ 15
## ການຈັດຕັ້ງປະຕິບັດ ການປັບໃໝ ແລະ ນຳໃຊ້ມາດຕະການອື່ນ

**ມາດຕາ 46 ການຈັດຕັ້ງປະຕິບັດ ການປັບໃໝ ແລະ ນຳໃຊ້ມາດຕະການອື່ນ**

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນເຈົ້າການໃນການຈັດຕັ້ງປະຕິບັດ ການປັບໃໝຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການບິນພົນລະເຮືອນ ພ້ອມທັງ ສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງ ເພື່ອພິຈາລະນານຳໃຊ້ມາດຕະການອື່ນ ຕາມ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 47 ເຈົ້າໜ້າທີ່ກວດກາການບິນພົນລະເຮືອນ**

ເຈົ້າໜ້າທີ່ກວດກາການບິນພົນລະເຮືອນ ແມ່ນ ບຸກຄົນທີ່ມີ ຄຸນວຸດທິ ແລະ ປະສົບການທາງດ້ານເຕັກນິກວິຊາການ ທີ່ຖືກແຕ່ງຕັ້ງໂດຍ ກະຊວງໂຍທາທິການ ແລະ ຂົນສົ່ງ ຕາມການສະເໜີຂອງກົມການບິນພົນລະເຮືອນ.

**ມາດຕາ 48 ສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ກວດກາການບິນພົນລະເຮືອນ**

ເຈົ້າໜ້າທີ່ກວດກາການບິນພົນລະເຮືອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1) ຕິດຕາມ ກວດກາ ການຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບການບິນພົນລະເຮືອນ;

2) ເຂົ້າເຖິງທຸກສະຖານທີ່ຂອງ ສະໜາມບິນ, ເດີ່ນບິນ ໃນຂອບເຂດທົ່ວປະເທດ ລວມເຖິງ ສິ່ງອຳນວຍຄວາມສະດວກ ແລະ ເອກະສານຕ່າງໆ ຂອງພາກສ່ວນທີ່ກ່ຽວຂ້ອງ;

3) ແຈ້ງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວກ່ຽວກັບການບິນພົນລະເຮືອນພາຍໃນ ແລະ ນອກສະໜາມບິນ ເພື່ອສະໜອງຂໍ້ມູນທີ່ກ່ຽວຂ້ອງໃນການ ກວດກາ, ກວດສອບ, ຕິດຕາມ, ປະເມີນຜົນ, ທົດສອບ ຫຼື ສືບສວນ-ສອບສວນ;

4) ກວດກາ ແລະ ທົດສອບ ປະສິດທິຜົນຂອງການຈັດຕັ້ງປະຕິບັດ ມາດຕະການ, ຂັ້ນຕອນ ແລະ ຄຸນນະພາບຂອງອຸປະກອນ ຄວາມປອດໄພ ແລະ ປ້ອງກັນຄວາມປອດໄພການບິນ;

5) ນຳໃຊ້ມາດຕະການປັບໃໝ ແລະ ມາດຕະການອື່ນ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການກ່ຽວກັບການບິນພົນລະເຮືອນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

6) ບັນທຶກ ການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການກ່ຽວກັບການບິນພົນລະເຮືອນ;

7) ປະສານສົມທົບກັບຂະແໜງການອື່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບການບິນພົນລະເຮືອນ;

8) ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຂອງຕົນຕໍ່ ກົມການບິນພົນລະເຮືອນ ຢ່າງເປັນປົກກະຕິ;

9) ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມ ກົດໝາຍ ແລະ ການມອບໝາຍ.

## ໝວດທີ 16
## ການຊຳລະ, ຄຸ້ມຄອງ ແລະ ນຳໃຊ້ເງິນປັບໃໝ

**ມາດຕາ 49 ການຊຳລະເງິນປັບໃໝ**

ຜູ້ທີ່ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການບິນພົນລະເຮືອນ ຕ້ອງຊຳລະເງິນປັບໃໝ ຕາມອັດຕາຂອງການລະເມີດ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ໂດຍການຊຳລະຜ່ານລະບົບ ທະນາຄານ, ໄປສະນີ, ຈຸດບໍລິການທີ່ລັດໄດ້ກຳນົດ.

**ມາດຕາ 50 ການຄຸ້ມຄອງເງິນປັບໃໝ**

ເງິນປັບໃໝທີ່ເກັບໄດ້ຈາກການລະເມີດດຳລັດສະບັບນີ້ ເຈັດສິບສ່ວນຮ້ອຍ (70%) ມອບເຂົ້າງົບປະມານແຫ່ງລັດ ແລະ ສາມສິບສ່ວນຮ້ອຍ (30%) ໃຫ້ນຳໃຊ້ເຂົ້າໃນວຽກງານຄວາມປອດໄພການບິນພົນລະເຮືອນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 51 ຂອງດຳລັດສະບັບນີ້.

**ມາດຕາ 51 ເປົ້າໝາຍການນຳໃຊ້ເງິນປັບໃໝ**

ເປົ້າໝາຍການນຳໃຊ້ເງິນປັບໃໝເຂົ້າໃນວຽກງານການບິນພົນລະເຮືອນ ໃຫ້ປະຕິບັດ ດັ່ງນີ້:

1) ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານ ການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການບິນພົນລະເຮືອນ;

2) ນຳໃຊ້ເຂົ້າວຽກງານບໍລິຫານ, ໂຄສະນາເຜີຍແຜ່ ນິຕິກຳ, ປື້ມຄູ່ມື, ຈັດຝຶກອົບຮົມ ດ້ານວິຊາການ ກ່ຽວກັບວຽກງານການບິນພົນລະເຮືອນ;

3) ຈັດຊື້ວັດຖຸປະກອນ ແລະ ສິ່ງອຳນວຍຄວາມສະດວກ ກ່ຽວກັບວຽກງານ ຄວາມປອດໄພ ແລະ ການປ້ອງກັນຄວາມປອດໄພ ການບິນ.

## ໝວດທີ 17
## ບົດບັນຍັດສຸດທ້າຍ

**ມາດຕາ 52 ການຈັດຕັ້ງປະຕິບັດ**

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ດຳລັດສະບັບນີ້ ໃຫ້ມີ ປະສິດທິພາບ ແລະ ປະສິດທິຜົນສູງ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 53 ຜົນສັກສິດ**

ດຳລັດສະບັບນີ້ມີຜົນສັກສິດ ນັບແຕ່ວັນທີ 19 ເດືອນ ມັງກອນ ປີ 2024 ເປັນຕົ້ນໄປ.

**ຕາງໜ້າລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

**ສອນໄຊ ສີພັນດອນ**